Asian Development Bank
Compliance Review Panel

ທະນາຄານພັດທະນາອາຊີ ກົມໄກການລາຍງານຜົນກະທົບຈາກໂຄງການ

# ຂັ້ນຕອນການເຄື່ອນໄຫວ
# ສໍາລັບຄະນະກໍາມະການກວດກາຄືນການປະຕິບັດ

**5 ມິຖຸນາ 2004**

ເອກະສານສະບັບນີ້ໄດ້ຖືກແປມາຈາກສະບັບພາສາອັງກິດທີ່ເຊື່ອຖືໄດ້ວ່າບໍ່ມີຄວາມແຕກຕ່າງ ຫລື ຂໍ້ຂັດແຍ້ງກັບເອກະສານນີ້.
ສະບັບພາສາລາວນີ້ໄດ້ຖືກພິມໃນເດືອນ ເມສາ 2005.

# ຕົວຫຍໍ້

| | | |
|---|---|---|
| ADB | Asian Development Bank | ທະນາຄານພັດທະນາອາຊີ |
| BCRC | Board Compliance Review Committee | ຄະນະກຳມະການບໍລິຫານການກວດກາຄືນ<br>ການປະຕິບັດຕາມ |
| CRP | Compliance Review Panel | ຄະນະກຳມະການກວດກາຄືນ<br>ການປະຕິບັດຕາມ |
| DMC | developing member country | ປະເທດສະມາຊິກ |
| OCRP | Office of the Compliance Review Panel | ຫ້ອງການຄະນະກຳມະການກວດກາ<br>ການປະຕິບັດ |
| OD | operations department | ພະແນກການປະຕິບັດງານ |
| OM | Operations Manual | ຄູ່ມືການປະຕິບັດງານ |
| SPF | Special Project Facilitator | ຜູ້ອຳນວຍຄວາມສະດວກພິເສດສຳລັບໂຄງການ |
| TOR | Terms of Reference | ບົດກຳນົດໜ້າວຽກ |

## ສາລະບານ


**I. ບົດສະເໜີ ........ 1**

ກ. ກົນໄກການລາຍງານຜົນກະທົບຈາກໂຄງການ ແລະ ຄະນະກຳມະການກວດກາຄືນການປະຕິບັດ (CRP) ຂອງທະນາຄານພັດທະນາອາຊີ (ADB) ........ 1

ຂ. ສ່ວນປະກອບ ແລະ ລັກສະນະພື້ນຖານ ........ 2

ຄ. ຈຸດປະສົງ ແລະ ຂອບເຂດ ........ 2

**II. ການຍື່ນຄຳຮ້ອງ ........ 4**

ກ. ຜູ້ໃດສາມາດຍື່ນຄຳຮ້ອງຂໍສຳລັບການກວດກາການປະຕິບັດໄດ້ ........ 5

ຂ. ຄວາມລັບສຳລັບຜູ້ຮ້ອງຂໍ ........ 5

ຄ. ຈະຍື່ນຄຳຮ້ອງແນວໃດສຳລັບການກວດກາການປະຕິບັດ ........ 5

ງ. ຮູບແບບມາດຕະຖານ ........ 6

ຈ. ພາສາ ........ 6

ສ. ເນື້ອໃນຄຳຮ້ອງໃຫ້ມີການກວດກາການປະຕິບັດ ........ 6

ຊ. ຂໍ້ຫ້າມ ........ 7

**III. ຂັ້ນຕອນການປະຕິບັດການກວດກາໃຫ້ມີການປະຕິບັດຕາມ ........ 9**

ກ. ບາດກ້າວຂັ້ນຕອນການປະຕິບັດ ແລະ ຂອບເຂດເວລາ ........ 9

**IV. ການປະຕິບັດການແກ້ໄຂຂໍ້ຜິດພາດ ........ 12**

ກ. ການຄວບຄຸມດູແລການປະຕິບັດໂຄງການຂອງບັນດາການປະຕິບັດການແກ້ໄຂຂໍ້ຜິດພາດ ........ 12

ຂ. ຮ່າງບົດລາຍງານການຕິດຕາມ ........ 13

ຄ. ບົດລາຍງານການຕິດຕາມ ........ 13

**V. ການເຂົ້າຮ່ວມຂອງຜູ້ຮ້ອງທຸກ ແລະ ຝ່າຍອື່ນໆ ........ 13**

ກ. ເງື່ອນໄຂຂອງຂໍ້ມູນ ........ 13

ຂ. ການກວດຄຳຮ້ອງຄືນ ........ 14

ຄ. ຂໍ້ມູນເພີ້ມເຕີມ ........ 14

**VI. ຄວາມໂປ່ງໃສ ແລະ ຄວາມລັບ ........ 14**

ກ. ຄວາມໂປ່ງໃສ ........ 14

ຂ. ຄວາມລັບ ........ 14

**VII.** **ການເຜີຍແຜ່ຂໍ້ມູນຂ່າວສານອອກສູ່ສາທາລະນະຊົນ ..... 15**

ກ. ການເຜີຍແຜ່ຕໍ່ສາທາລະນະຊົນ ..... 15

ຂ. ການອອກຂ່າວ ແລະ ການສື່ສານກັບສາທາລະນະຊົນ ..... 15

ຄ. ເວັບໄຊທ໌ ..... 15

ງ. ການລົງທະບຽນສຳລັບຄົນທົ່ວໄປ ..... 15

ຈ. ການເຜີຍແຜ່ບົດລາຍງານສູ່ສາທາລະນະຊົນ ..... 16

**VIII.** **ພາກທົ່ວໄປ ..... 17**

ກ. ການເຂົ້າຫາທະນາຄານພັດທະນາອາຊີ (ADB): ພະນັກງານ ແລະ ຂໍ້ມູນ ..... 17

ຂ. ຂະບວນການບໍລິຫານຕ່າງໆຂອງຄະນະກຳມະການກວດກາການປະຕິບັດ (CRP) ..... 17

ຄ. ບົດລາຍງານປະຈຳປີ ..... 17

ງ. ຄຳແນະນຳທາງດ້ານກົດໝາຍ ..... 17

ຈ. ການກວດຄືນບັນດາຂະບວນການປະຕິບັດງານຂອງການກວດກາການປະຕິບັດ ..... 17

ສ. ການປະສານງານກັນ ..... 18

ຊ. ກອງເລຂາທີ່ສະໜັບສະໜູນຄະນະກຳມະການການກວດກາການປະຕິບັດ (BCRC) ..... 18

ຍ. ການຕິດຕໍ່ກັບ ຄະນະກຳມະການການກວດກາການປະຕິບັດ (CRP) ແລະ ຜູ້ອຳນວຍຄວາມສະດວກພິເສດສຳລັບໂຄງການ (SPF) ..... 18

**ເອກະສານຊ້ອນທ້າຍ**

1. ແບບຢ່າງການຮ້ອງຂໍສຳລັບການກວດການການປະຕິບັດ ..... 20

2. ຂັ້ນຕອນຂອງການກວດກາການປະຕິບັດ ..... 22

## I. ບົດສະເໜີ

### ກ. ກົນໄກການລາຍງານຜົນກະທົບຈາກໂຄງການ ແລະ ຄະນະກຳມະການກວດກາຄືນການປະຕິບັດ (CRP) ຂອງທະນາຄານພັດທະນາອາຊີ (ADB)

1. ນີ້ແມ່ນບັນດາຂະບວນການເຄື່ອນໄຫວຂອງຄະນະກຳມະການກວດກາຄືນການປະຕິບັດຂອງທະນາຄານພັດທະນາອາຊີ (ADB). ຄະນະກຳມະການການກວດກາຄືນການປະຕິບັດຕາມ (CRP) ແມ່ນການປະຕິບັດການໜຶ່ງທີ່ເປັນເອກະລາດຈັດຕັ້ງຂຶ້ນໂດຍຄະນະບໍລິຫານຂອງທະນາຄານພັດທະນາອາຊີ ໃນວັນທີ 29 ເມສາ 2003 ເພື່ອສືບຕໍ່ ປະຕິບັດການກວດກາຄືນການປະຕິບັດຕາມກົນໄກການລາຍງານຜົນກະທົບຈາກໂຄງການຂອງທະນາຄານພັດທະນາ ອາຊີ. ກົນໄກການລາຍງານດັ່ງກ່າວເຊິ່ງມີຜົນບັງຄັບໃຊ້ຕັ້ງແຕ່ວັນທີ 12 ທັນວາ 2003 ນັ້ນແມ່ນມີ 2 ໄລຍະຄື: (i) ຂະບວນການປຶກສາຫາລື ເຊິ່ງເລີ່ມປະຕິບັດໂດຍຜ່ານຜູ້ອຳນວຍຄວາມສະດວກພິເສດສຳລັບໂຄງການ (SPF) ແລະ (ii) ຂະບວນການກວດກາຄືນການປະຕິບັດເຊິ່ງເລີ່ມປະຕິບັດໂດຍຄະນະກຳມະການການກວດກາຄືນການປະຕິບັດ (CRP). ເຖິງແມ່ນວ່າຜູ້ອຳນວຍຄວາມສະດວກພິເສດສຳລັບໂຄງການ (SPF) ແລະ ຄະນະກຳມະການການກວດກາຄືນການປະຕິບັດຕາມ (CRP) ຈະມີໜ້າທີ່ແຍກກັນກໍ່ຕາມ, ທັງສອງແມ່ນຈະຕ້ອງໄດ້ພົວພັນກັນເພື່ອຈຸດປະສົງໃນການຕອບຮັບ ກັບການຮ້ອງທຸກຈາກຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ.

2. ບັນດາຂະບວນການເຄື່ອນໄຫວເຫລົ່ານີ້ແມ່ນເຮັດໃຫ້ລະບຽບການ ການປະຕິບັດງານມີຄວາມຈະແຈ້ງ ແລະ ລະອຽດເຊິ່ງສະແດງອອກໃນເອກະສານຂອງຄະນະບໍລິຫານເພື່ອສ້າງກົນໄກການລາຍງານຜົນກະທົບຈາກໂຄງການຂອງທະນາຄານພັດທະນາອາຊີ (ADB) ສະບັບໃໝ່: "ການກວດຄືນໜ້າທີ່ການກວດສອບ: ການສ້າງກົນໄກການລາຍງານຜົນກະທົບຈາກໂຄງການຂອງທະນາຄານພັດທະນາອາຊີ ສະບັບໃໝ່" (R79-03 ລົງວັນທີ 8 ເມສາ 2003). ຂະບວນການຕ່າງໆເຫລົ່ານີ້ແມ່ນອີງຕາມເອກະສານຂອງຄະນະບໍລິຫານ, ເຊິ່ງໄດ້ຄຳນຶງເຖິງບັນດາລະບຽບການໃນຄູ່ມືການປະຕິບັດງານໃນພາກ L1/BP ແລະ L1/OP ຂອງກົນໄກການລາຍງານຜົນກະທົບຈາກໂຄງການ ຂອງທະນາຄານພັດທະນາອາຊີ (ADB) ທີ່ໄດ້ພິມອອກໃນວັນທີ 29 ຕຸລາ 2003. ຄະນະກຳມະການກວດກາຄືນການປະຕິບັດໄດ້ຮັບເອົາບັນດາຂະບວນການຕ່າງໆທີ່ສອດຄ່ອງກັບເນື້ອໃນຂອງວັກທີ 98 ໃນເອກະສານຄະນະບໍລິຫານ, ແລະ ຈະປັບປຸງໃໝ່ເມື່ອຈຳເປັນ.

3. ໂດຍສອດຄ່ອງກັບບັນດາຫລັກການຕ່າງໆເຊິ່ງໄດ້ເນັ້ນໜັກເຖິງກົນໄກການລາຍງານລຸ່ມນີ້, ຄະນະກຳມະ ການກວດກາຄືນການປະຕິບັດ (CRP) ຈະ:

- (i) ເພີ່ມທະວີປະສິດທິຜົນຂອງການພັດທະນາ ແລະ ຄຸນນະພາບຂອງໂຄງການຂອງທະນາຄານ ພັດທະນາອາຊີ (ADB);
- (ii) ຕອບຮັບກັບຄວາມກັງວົນຂອງຜູ້ທີ່ໄດ້ຮັບຜົນກະທົບທາງລົບຈາກໂຄງການ ແລະ ມີຄວາມຍຸດຕິທຳກັບບັນດາຜູ້ທີ່ມີສ່ວນກ່ຽວຂ້ອງທຸກຄົນ;
- (iii) ສ່ອງແສງເຖິງມາດຕະຖານວິຊາສະເພາະ ແລະ ວິຊາການໃນການຈັດຫາພະນັກງານ ແລະ ປະຕິບັດການຕ່າງໆ;
- (iv) ເປັນເອກະລາດ ແລະ ມີຄວາມໂປ່ງໃສເທົ່າທີ່ຈະເປັນໄປໄດ້; ແລະ
- (v) ຫລຸດຜ່ອນຄ່າໃຊ້ຈ່າຍ, ມີປະສິດທິພາບ, ແລະ ເປັນສ່ວນຊ່ວຍແກ່ການຕິດຕາມອື່ນ, ການກວດສອບ, ການຄວບຄຸມຄຸນນະພາບ, ແລະ ລະບົບການສຳລວດທີ່ທະນາຄານພັດທະນາອາຊີ (ADB) ນຳໃຊ້ຢູ່.

## ຂ. ສ່ວນປະກອບ ແລະ ລັກສະນະພື້ນຖານ

4. ຄະນະກຳມະການ ການກວດກາຄືນການປະຕິບັດຕາມ (CRP) ປະກອບມີສະມະຊິກ 3 ຄົນ, 1 ໃນ 3 ຄົນແມ່ນເຮັດໜ້າທີ່ເປັນປະທານ. ຫ້ອງການຄະນະກຳມະການກວດກາຄືນການປະຕິບັດຕາມ (OCRP) ຈະມີກອງ ເລຂາເພື່ອຊ່ວຍຄະນະກຳມະການກວດກາຄືນການປະຕິບັດ (CRP). ສະມາຊິກຄະນະກຳມະການກວດກາຄືນການປະຕິບັດຕາມຈະບໍ່ເໝາະສົມທີ່ຈະເຂົ້າຮ່ວມການກວດກາຄືນການປະຕິບັດຕາມຖ້າສະແດງໃຫ້ເຫັນວ່າອາດຈະມີ ຄວາມສົນໃຈສ່ວນຕົວ ຫລືມີສ່ວນຮ່ວມມາກ່ອນແລ້ວ.

5. ສະມາຊິກຄະນະກຳມະການກວດກາຄືນການປະຕິບັດ (CRP) ອີກ 2 ຄົນ ແມ່ນມາຈາກປະເທດໃນຂົງເຂດ (DMC), ເຊິ່ງຢ່າງໜ້ອຍໜຶ່ງຄົນຕ້ອງມາຈາກປະເທດສະມາຊິກທີ່ກຳລັງພັດທະນາ. ສະມາຊິກຄະນະກຳມະການ ການກວດກາຄືນການປະຕິບັດຕາມຜູ້ທີ່ 3 ແມ່ນມາຈາກປະເທດທີ່ບໍ່ຢູ່ໃນຂົງເຂດ. 1 ໃນສະມາຊິກ 3 ຄົນແມ່ນຈະຖືກແຕ່ງຕັ້ງໃຫ້ເປັນປະທານໃຫ້ເຮັດວຽກເຕັມເວລາຢ່າງໜ້ອຍ 1 ປີ. ສ່ວນສະມາຊິກອີກ 2 ຄົນທີ່ຍັງເຫລືອແມ່ນຖືກແຕ່ງຕັ້ງໃຫ້ເຮັດວຽກບໍ່ເຕັມມື້ເຊິ່ງຈະເຮັດວຽກໃນຍາມທີ່ຄະນະກຳມະການກວດກາຄືນການປະຕິບັດຕາມມີວຽກຫລາຍ. ຖ້າຈຳເປັນ, ຄະນະກຳມະການ ການກວດກາຄືນການປະຕິບັດຕາມ (CRP) ຈະແນະນຳຄະນະທາງເລືອກອື່ນໃຫ້ແກ່ຄະນະບໍລິຫານ.

6. ຄະນະກຳມະການກວດກາຄືນການປະຕິບັດ (CRP) ລາຍງານໂດຍກົງແກ່ຄະນະບໍລິຫານທຸກໆກິດຈະກຳ, ຍົກເວັ້ນ 2 ກິດຈະກຳສະເພາະທີ່ຄະນະກຳມະການກວດກາຄືນການປະຕິບັດ (CRP) ລາຍງານແກ່ຄະນະກຳມາທິການກວດກາຄືນການປະຕິບັດ (BCRC). ຄະນະກຳມາທິການກວດກາຄືນການປະຕິບັດ (BCRC) ແມ່ນ (i) ກວດກາບັນດາບົດກຳນົດໜ້າວຽກ ແລະ ກຳນົດເວລາສຳລັບການດຳເນີນການກວດກາການປະຕິບັດຕາມແຕ່ລະອັນເຊິ່ງໄດ້ຮັບອະນຸມັດໂດຍຄະນະບໍລິຫານກ່ອນທີ່ ຄະນະກຳມະການກວດກາຄືນການປະຕິບັດ (CRP) ຈະອະນຸມັດອອກ ແລະ (ii) ກວດຄືນຮ່າງບົດລາຍງານການຕິດຕາມການປະຕິບັດຂອງທຸກໆການເຄື່ອນໄຫວຂອງການກວດກາຄືນການປະຕິບັດທີ່ໄດ້ຮັບອະນຸມັດຈາກ
ຄະນະບໍລິຫານໃຫ້ຖືກຕ້ອງກ່ອນຄະນະກຳມະການກວດກາຄືນການປະຕິບັດ (CRP) ຈະກວດກາຂັ້ນຕອນສຸດທ້າຍ. ໜ້າທີ່ຂອງຄະນະກຳມາທິການກວດກາຄືນການປະຕິບັດ (CRP) ໃນການອະນຸມັດບົດກຳນົດໜ້າວຽກ (TOR) ແລະ ກຳນົດເວລາໃນການປະຕິບັດງານນັ້ນແມ່ນເພື່ອເຮັດແນວໃດໃຫ້ຄະນະກຳ ມະການ ການກວດກາຄືນການປະຕິບັດ (CRP) ໃຫ້ປະຕິບັດຢູ່ໃນຂອບເຂດຂອງການກວດກາການປະຕິບັດ. ຄະນະກຳມາທິການກວດກາຄືນການປະຕິບັດ (BCRC) ຈະກວດຄືນຮ່າງບົດລາຍງານການຕິດຕາມເພື່ອຮັບປະກັນໃຫ້ ຄະນະກຳມະການກວດກາຄືນການປະຕິບັດ (CRP) ດຳເນີນຂະບວນການໃຫ້ໄດ້ຢ່າງເປັນທີ່ພໍໃຈໃນການຕິດຕາມການປະຕິບັດຂອງທຸກໆການເຄື່ອນໄຫວ ເພື່ອແກ້ໄຂບັນຫາ.

## ຄ. ຈຸດປະສົງ ແລະ ຂອບເຂດ

7. ຈຸດປະສົງຂອງການກວດກາຄືນການປະຕິບັດແມ່ນເພື່ອເພີ້ມທະວີຄວາມເຊື່ອໝັ້ນໃນການປະຕິບັດງານຂອງທະນາຄານພັດທະນາອາຊີ (ADB) ເຊິ່ງມີການຕັ້ງເວທີໃຫ້ແກ່ຜູ້ທີ່ໄດ້ຮັບຜົນກະທົບທາງລົບຈາກໂຄງການ (ແລະ ໃນກໍລະນີພິເສດ, ສະມາຊິກຄະນະບໍລິຫານ) ສາມາດສະເໜີການຮ້ອງທຸກຕໍ່ຂອງເຂົາເຈົ້າກັບທະນາຄານພັດທະນາອາຊີ (ADB) ໂດຍການຍື່ນຄຳຮ້ອງເພື່ອການກວດກາການປະຕິບັດ. ຄະນະກຳມະການກວດກາຄືນການປະຕິບັດ (CRP) ສືບສວນການລະເມີດຂອງທະນາຄານພັດທະນາອາຊີ (ADB) ບັນດານະໂຍບາຍ ແລະ ຂະບວນການຕ່າງໆໃນການເຄື່ອນໄຫວຂອງທຸກໆໂຄງການຊ່ວຍເຫລືອຂອງທະນາຄານພັດທະນາອາຊີ (*ADB*) ທີ່ສົ່ງຜົນກະທົບທາງລົບໂດຍ ທາງກົງ,

ຜົນຮ້າຍດ້ານວັດຖຸແກ່ປະຊາຊົນໃນທ້ອງຖິ່ນໃນການຮ່າງ, ພິຈາລະນາ, ຫລື ການປະຕິບັດໂຄງການຊ່ວຍເຫລືອຂອງທະນາຄານພັດທະນາອາຊີ (ADB).[1]

8. ຄະນະກຳມະການກວດກາຄືນການປະຕິບັດ (CRP) ຈະກວດເບິ່ງວ່າທະນາຄານພັດທະນາອາຊີ (ADB) ປະຕິບັດສອດຄ່ອງຫລື ບໍ່ກັບບັນດານະໂຍບາຍ ແລະ ຂະບວນການຕ່າງໆໃນການເຄື່ອນໄຫວກັບໂຄງການສະເພາະໃດໜຶ່ງພາຍໃຕ້ການກວດກາການປະຕິບັດ. ຄະນະກຳມະການກວດກາຄືນການປະຕິບັດ (CRP) ຈະກວດກາເບິ່ງອີກວ່າຜົນຮ້າຍໂດຍກົງ ແລະ ຜົນຮ້າຍດ້ານວັດຖຸທີ່ຜູ້ຮ້ອງຂໍສະເໜີນັ້ນແມ່ນມີສາຍເຫດມາຈາກທະນາຄານພັດທະນາອາຊີ (ADB) ລະເມີດນະໂຍບາຍ ແລະ ຂະບວນການຕ່າງໆຂອງຕົນໃນການຮ່າງ, ພິຈາລະນາ ແລະ/ຫລື ປະຕິບັດໂຄງການສະເພາະໃດໜຶ່ງ.

9. ຂອບເຂດຂອງການກວດການການປະຕິບັດແມ່ນ "ບັນດານະໂຍບາຍ ແລະ ຂະບວນການຕ່າງໆໃນການ ເຄື່ອນໄຫວຂອງທະນາຄານພັດທະນາອາຊີ (ADB)" ເພາະວ່າມັນໄດ້ພົວພັນເຖິງການຂຽນ, ພິຈາລະນາ, ຫລື ການປະຕິບັດໂຄງການຊ່ວຍເຫລືອຂອງທະນາຄານພັດທະນາອາຊີ (ADB), ແລະ ບໍ່ລວມເອົາວຽກຕ່າງໆທີ່ພົວພັນກັບການຈັດຊື້/ຈັດຈ້າງ ສິນຄ້າ, ການບໍລິການ, ລວມເຖິງການບໍລິການທີ່ປຶກສາ, ແລະ ການເບິ່ງແຍງດູແລຕ່າງໆທີ່ບໍ່ແມ່ນການເຄື່ອນໄຫວໂຄງການ, ເຊັ່ນ ການເງິນ ແລະ ບໍລິຫານ ທີ່ໄດ້ບົ່ງໄວ້ໃນວັກທີ 26 ຂອງຂະບວນການຕ່າງໆເຫລົ່ານີ້. ບັນດານະໂຍບາຍ ແລະ ຂະບວນການຕ່າງໆໃນການເຄື່ອນໄຫວນີ້ແມ່ນມີຢູ່ໃນຄູ່ມືການປະຕິບັດງານ (OM) ທີ່ພິມອອກໃນ ເດືອນ ຕຸລາ 2003, ຄຳແນະນຳການບໍລິຫານໂຄງການ, ແລະ ຂັ້ນຕອນການເຄື່ອນໄຫວທຸລະກິດສະບັບໃໝ່, ເຊິ່ງໄດ້ມີການປັບປຸງເປັນໄລຍະໆ. ບັນດານະໂຍບາຍ ແລະ ຂະບວນການຕ່າງໆໃນການເຄື່ອນໄຫວທີ່ອະນຸມັດໂດຍ ຄະນະບໍລິຫານຈະຖືກນຳໃຊ້ໃນກໍລະນີບໍ່ມີພາກສ່ວນຂອງຄູ່ມືການປະຕິບັດງານ (OM) ທີ່ສອດຄ່ອງກັນ, ບັນດາຄຳແນະນຳ ສຳລັບພະນັກງານ, ຫລື ເອກະສານທີ່ຄ້າຍຄືກັນເຊິ່ງຈະນຳໃຊ້ຄືກັນກັບພາກຂອງຄູ່ມືການປະຕິບັດງານ (OM) ຫລື ໃນເຫດການທີ່ມີຂໍ້ຂັດກັນລະຫວ່າງບັນດານະໂຍບາຍທີ່ຄະນະບໍລິຫານໄດ້ອະນຸມັດ ແລະ ພາກຄູ່ມືການປະຕິບັດງານ (OM) ນັ້ນ, ນະໂຍບາຍ ຈະຍັງຄົງໃຊ້ໄດ້.

10. ໂຄງການທີ່ໄດ້ປະຕິບັດ ຫລື ອະນຸມັດກ່ອນທີ່ຈະມີການປັບປຸງຄູ່ມືການປະຕິບັດງານ (OM) ທີ່ໄດ້ກຳນົດອອກໃນເດືອນຕຸລາ 2003, ບັນດານະໂຍບາຍ ແລະ ຂະບວນການຕ່າງໆໃນການເຄື່ອນໄຫວທີ່ນຳໃຊ້ນັ້ນແມ່ນໄດ້ຮັບອະນຸມັດຈາກຄະນະບໍລິຫານ, ເຖິງວ່າມັນຈະລວມຢູ່ໃນຄູ່ມືການປະຕິບັດງານ (OM) ທີ່ນຳໃຊ້ຢູ່ຫລືບໍ່ກໍ່ຕາມ. ຄະນະ ກຳມະການ ການກວດກາການປະຕິບັດ (CRP) ຈະຄິດເຖິງບັນດານະໂຍບາຍ ແລະ ຂັ້ນຕອນທີ່ສອດຄ່ອງກັນອີງຕາມຂໍ້ມູນທີ່ໄດ້ຈາກຄຳຮ້ອງຂອງການກວດກາການປະຕິບັດ ແລະ ໂດຍຜ່ານການປຶກສາຫາລືກັບພະແນກປະຕິບັດ ງານ (OD) ທີ່ກ່ຽວຂ້ອງ ແລະ ຜູ້ທີ່ມີສ່ວນຮ່ວມອື່ນໆ.

11. ບັນດານະໂຍບາຍ ແລະ ຂະບວນການຕ່າງໆໃນການເຄື່ອນໄຫວຂອງທະນາຄານພັດທະນາອາຊີ (ADB) ທີ່ນຳໃຊ້ກັບໂຄງການພາຍໃຕ້ການກວດກາການປະຕິບັດມີດັ່ງນີ້:

---

[1] ຄຳສັບ "ໂຄງການຊ່ວຍເຫລືອຂອງທະນາຄານພັດທະນາອາຊີ" ໝາຍເຖິງໂຄງການທີ່ທະນາຄານພັດທະນາອາຊີຊ່ວຍເຫລືອ ຫລື ກຳລັງຈະຊວ່ຍເຫລືອທາງ ດ້ານການເງິນ, ການບໍລິຫານ, ແລະ ການຊ່ວຍເຫລືອທີ່ກວມເອົາການປະຕິບັດການຂອງທັງພາກສ່ວນລັດ ແລະ ເອກະຊົນ (ເຊັ່ນເງິນກູ້ໂຄງການ, ເງິນກູ້ແຜນການ, ເງິນກູ້ຂະແໜງການ, ເງິນກູ້ສຳລັບການຊ່ວຍເຫລືອທາງດ້ານວິຊາການ, ເງິນກູ້ຢືມຈາກສະຖາບັນການເງິນ, ເງິນກູ້ຢືມລົງທຶນ, ການຄ້ຳປະກັນ, ການລົງທຶນຄົງທີ່, ແລະ ເງິນຊ່ວຍເຫລືອລ້າດ້ານວິຊາການ) ເຊິ່ງຢູ່ພາຍໃຕ້ບັນດາກົດລະບຽບ ແລະ ຂັ້ນຕອນຕ່າງໆຂອງ ທະນາຄານພັດທະນາອາຊີ. ຄຳສັບ "ໂຄງການຊ່ວຍເຫລືອຂອງທະນາຄານພັດທະນາອາຊີ" ລວມມີ "ສ່ວນປະກອບຕ່າງໆຂອງໂຄງການ" ເຖິງແມ່ນວ່າບ່ອນໃຫ້ທຶນຈະແມ່ນທະນາຄານ ພັດທະນາອາຊີກໍ່ຕາມ, ຄູ່ຮ່ວມສະໜອງທຶນແມ່ນ, ລັດຖະບານ, ຫລື ຜູ້ສະໜັບສະໜຸນໂຄງການເອກະຊົນ. ເຖິງຢ່າງໃດກໍ່ຕາມ, ຄຳສັບ "ສ່ວນປະກອບຂອງໂຄງການ" ບໍ່ໄດ້ກວມລວມເອົາສ່ວນປະກອບ ຫລື ສິ່ງອຳນວຍຄວາມສະດວກຕ່າງໆທີ່ຢູ່ພາຍໃຕ້ຜູ້ຢືມ, ສຳນັກງານຜູ້ປະສານງານ, ຫລື ຜູ້ສະໜັບສະໜູນໂຄງການເຊິ່ງວ່າທະນາຄານພັດທະນາອາຊີຈະຕ້ອງມີຄວາມລະມັດລະວັງເພື່ອຈຳແນກໄດ້ລະດັບຄວາມສ່ຽງທີ່ເກີດຂື້ນກັບປະຊາຊົນ ແລະ ອາດຈະກ່ຽວເຖິງທະນາຄານເອງ.

(i) ໃນກໍລະນີຂອງໂຄງການທີ່ສະເໜີ, ທີ່ຍັງມີຜົນຢູ່ໃນຕອນທີ່ການຮ້ອງທຸກໄດ້ຖືກຍື່ນຕໍ່ຜູ້ອຳນວຍຄວາມສະດວກພິເສດສຳລັບໂຄງການ; ແລະ

(ii) ໃນກໍລະນີຂອງໂຄງການທີ່ກຳລັງດຳເນີນຢູ່, ທີ່ກຳລັງດຳເນີນຢູ່ໃນເວລາທີ່ຄະນະບໍລິຫານອະນຸມັດໂຄງການໂດຍອີງຕາມການຂຽນ ຫລື ການພິຈາລະນາໂຄງການ, ແລະ ໂຄງການທີ່ກຳລັງດຳເນີນຢູ່ໃນຕອນທີ່ມີການລະເມີດ ຫລື ເຫດການຮ້າຍໄດ້ເກີດຂື້ນເວລາການປະຕິບັດໂຄງການ.

12. "ໂຄງການທີ່ສະເໜີ" ໝາຍເຖິງໂຄງການທີ່ຢູ່ໃນໄລຍະກະກຽມທີ່ຍັງບໍ່ທັນໄດ້ຮັບອະນຸມັດຈາກຄະນະບໍລິຫານ ຫລື ປະທານ (ເຊິ່ງມອບສິດໂດຍຄະນະບໍລິຫານ), ແລະ "ໂຄງການທີ່ກຳລັງດຳເນີນຢູ່" ໝາຍເຖິງໂຄງການທີ່ໄດ້ຮັບອະນຸມັດແລ້ວຈາກຄະນະບໍລິຫານ ຫລື ປະທານ (ເຊິ່ງມອບສິດໂດຍຄະນະບໍລິຫານ).

## II. ການຍື່ນຄຳຮ້ອງ

13. ກ່ອນທີ່ຈະຍື່ນຄຳຮ້ອງເຖິງຄະນະກຳມະການກວດການຄືນການປະຕິບັດ (CRP), ຜູ້ຮ້ອງຂໍທຸກງຄືນ (ນອກຈາກສະມາຊິກຄະນະບໍລິຫານ) ກ່ອນອື່ນໝົດຕ້ອງຍື່ນການຮ້ອງທຸກຕໍ່ຜູ້ອຳນວຍຄວາມສະດວກພິເສດສຳລັບໂຄງການ (SPF) ແລະ ພະຍາຍາມຫາຂໍ້ຕົກລົງໃຫ້ແກ່ພວກເຂົາໂດຍຜ່ານໄລຍະການປຶກສາຫາລື. ຜູ້ຮ້ອງຂໍທຸກຄືນຄວນຈະອ້າງເຖິງ ຂັ້ນຕອນຕ່າງໆໃນການເຄື່ອນໄຫວສຳລັບຜູ້ອຳນວຍຄວາມສະດວກພິເສດສຳລັບໂຄງການ (SPF), ເຊິ່ງສາມາດເອົາໄດ້ຈາກຜູ້ອຳນວຍຄວາມສະດວກພິເສດສຳລັບໂຄງການ (SPF) ຫລື ຄະນະກຳມະການກວດກາການປະຕິບັດຄືນ (CRP). ເອກະສານນີ້ມີຢູ່ເວັບໄຊທ໌ ຂອງຄະນະກຳມະການກວດການການຄືນປະຕິບັດ (CRP) www.compliance.adb.org ແລະ ເວັບໄຊທ໌ ຂອງຜູ້ອຳນວຍຄວາມສະດວກພິເສດສຳລັບໂຄງການ (SPF) www.adb.org/spf. ຫລັງຈາກທີ່ຍື່ນຄຳຮ້ອງທຸກຕໍ່ຜູ້ອຳນວຍຄວາມສະດວກພິເສດສຳລັບໂຄງການ (SPF) ແລ້ວ, ຄຳຮ້ອງສຳລັບການກວດກາຄືນການປະຕິບັດຈະສາມາດຍື່ນຕໍ່ຄະນະກຳມະການກວດກາຄືນການປະຕິບັດ (CRP) ໄດ້:

(i) ຖ້າວ່າ ແລະ ເມື່ອໃດຜູ້ອຳນວຍຄວາມສະດວກພິເສດສຳລັບໂຄງການ (SPF) ເຫັນວ່າຄຳຮ້ອງທຸກບໍ່ເໝາະສົມໂດຍ (ບາດກ້າວ 3 ຂອງຂັ້ນຕອນການປຶກສາຫາລື); ຫລື

(ii) ເມື່ອໃດທີ່ຜູ້ຮ້ອງທຸກໄດ້ຮັບຜົນການສືບຄົ້ນ ແລະ ການປະເມີນຜົນຄຳຮ້ອງທຸກຂອງຜູ້ອຳນວຍຄວາມສະດວກພິເສດສຳລັບໂຄງການ (SPF), ແລະ ຕັດສິນໃຈທີ່ຈະບໍ່ດຳເນີນຕາມຂັ້ນຕອນການປຶກສາຫາລື (ຕອນທ້າຍຂອງບາດກ້າວ 4 ຂອງຂັ້ນຕອນການປຶກສາຫາລື); ຫລື

(iii) ຖ້າວ່າຜູ້ຮ້ອງທຸກເຫັນວ່າຂັ້ນຕອນການປຶກສາຫາລືບໍ່ມີປະໂຫຍດ (ບາດກ້າວ 5, 6 ຫລື 7 ຂອງຂັ້ນຕອນການປຶກສາຫາລື); ຫລື

(iv) ຖ້າວ່າຜູ້ອຳນວຍຄວາມສະດວກພິເສດສຳລັບໂຄງການ (SPF) ຢຸດຕິໄລຍະການປຶກສາຫາລື ຫລື ຍ້ອນຜູ້ມີສ່ວນຮ່ວມອື່ນໆຢຸດເຊົາຂັ້ນຕອນການປຶກສາຫາລື.

14. ໃນກໍລະນີສ່ວນໃຫຍ່ແລ້ວ, ການຍື່ນຄຳຮ້ອງສຳລັບການກວດກາການປະຕິບັດສະແດງໃຫ້ເຫັນວ່າໄລຍະການປຶກສາຫາລືແມ່ນຖືກປະລະໄປ ຫລື ບໍ່ດັ່ງນັ້ນກໍ່ແມ່ນສິ້ນສຸດແລ້ວ. ໃນກໍລະນີທີ່ເກີດຂື້ນຜ່ານມາ, ເຊິ່ງວ່າຜູ້ຮ້ອງທຸກມີຄວາມກັງວົນກ່ຽວກັບບັນຫາການກວດກາຄືນການປະຕິບັດ, ຜູ້ຮ້ອງຂໍອາດຈະຍື່ນຄຳຮ້ອງຂໍໄດ້ທຸກໆເວລາໃນໄລຍະການປະຕິບັດການໂຄງການ (ບາດກ້າວ 7 ຂອງຂັ້ນຕອນການປຶກສາຫາລື), ໂດຍທີ່ບໍ່ຈຳເປັນຕ້ອງປະລະຂະບວນການປຶກສາຫາລື.

15. ໃນກໍລະນີທີ່ຜູ້ຮ້ອງທຸກຍື່ນຄຳຮ້ອງສຳລັບການກວດກາການປະຕິບັດ, ຜູ້ອຳນວຍຄວາມສະດວກພິເສດ (SPF) ຈະແຈ້ງໃຫ້ຄະນະກຳມະການກວດກາການປະຕິບັດ (CRP) ຮັບຮູ້ນຳກ່ຽວກັບເອກະສານ ແລະ ຂໍ້ມູນຕ່າງໆທີ່ກ່ຽວກັບຄວາມເໝາະສົມ ແລະ ຂໍ້ມູນຄວາມຈິງທີ່ເກັບກຳໃນໄລຍະການປຶກສາຫາລືກັບຄະນະກຳມະການກວດກາການປະຕິບັດ (CRP). ຖ້າວ່າ ຜູ້ອຳນວຍຄວາມສະດວກພິເສດ (SPF) ປະຕິເສດບໍ່ຮັບເອົາຄຳຮ້ອງທຸກເຊິ່ງຖືວ່າມັນບໍ່ເໝາະສົມແລ້ວ, ຄະນະກຳມະການກວດກາການປະຕິບັດ (CRP) ຈະຕັດສິນຢ່າງເປັນເອກະລາດວ່າການຮ້ອງຂໍນັ້ນຈະຖືກຕາມມາດຕະຖານຂອງການກວດກາການປະຕິບັດຕາມຫລືບໍ່.

## ກ. ຜູ້ໃດສາມາດຍື່ນຄຳຮ້ອງຂໍສຳລັບການກວດກາການປະຕິບັດໄດ້

16. ລຸ່ມນີ້ແມ່ນຜູ້ທີ່ສາມາດຍື່ນຄຳຮ້ອງຂໍສຳລັບການກວດກາການປະຕິບັດຕາມ:

(i) ກຸ່ມຄົນທີ່ປະກອບດ້ວຍສອງຄົນ ຫລື ຫລາຍກວ່ານັ້ນ (ເຊັ່ນ ອົງການຈັດຕັ້ງ, ສະມະຄົມ, ສັງຄົມໃດໜຶ່ງ, ຫລື ກຸ່ມຄົນອື່ນໆ) ຂອງປະເທດກູ້ຢືມທີ່ທະນາຄານພັດທະນາອາຊີມີໂຄງການຊ່ວຍເຫລືອຢູ່ ຫລື ຢູ່ບັນດາປະເທດສະມາຊິກທີ່ຕິດກັບປະເທດທີ່ກູ້ຢືມ;

(ii) ຕົວແທນຈາກທ້ອງຖິ່ນຂອງກຸ່ມທີ່ໄດ້ຮັບຜົນກະທົບ;

(iii) ຕົວແທນທີ່ບໍ່ແມ່ນຈາກທ້ອງຖິ່ນ, ໃນກໍລະນີຍົກເວັ້ນທີ່ບໍ່ສາມາດຫາຕົວແທນຈາກທ້ອງຖິ່ນໄດ້ ແລະ ໄດ້ຮັບການເຫັນດີຈາກຄະນະກຳມະການກວດກາການປະຕິບັດ (CRP); ຫລື

(iv) ສະມາຊິກສະພາບໍລິຫານຄົນໜຶ່ງ ຫລື ຫລາຍຄົນ, ຫລັງຈາກທີ່ໄດ້ຍົກຄວາມເປັນຫ່ວງ ກັບຝ່າຍບໍລິຫານກ່ອນ, ໃນກໍລະນີພິເສດທີ່ມີການກ່ຽວຂ້ອງຂອງການກ່າວຫາຂອງການລະເມີດຢ່າງຮ້າຍແຮງຕໍ່ນະໂຍບາຍ ແລະ ຂະບວນການເຄື່ອນໄຫວຕ່າງໆຂອງທະນາຄານທີ່ພົວພັນກັບໂຄງການຊ່ວຍເຫລືອຂອງທະນາຄານທີ່ກຳລັງດຳເນີນຢູ່ເຊິ່ງມີ ຫລື ອາດຈະມີຜົນກະທົບໂດຍທາງກົງ, ດ້ານວັດຖຸຕໍ່ຊຸມຊົນ ຫລື ກຸ່ມຄົນໃດໜຶ່ງທີ່ອາໃສຢູ່ໃນປະເທດທີ່ຕິດກັບປະເທດກູ້ຢືມ.

17. ການຍື່ນຄຳຮ້ອງສຳລັບການກວດກາການປະຕິບັດແມ່ນບໍ່ມີການຊັກຊ້າ ຫລື ຖ້າບໍ່ດັ່ງນັ້ນມັນຈະສົ່ງຜົນກະທົບ ຕໍ່ການຂຽນ, ການພິຈາລະນາ, ຫລື ການປະຕິບັດໂຄງການ ນອກຈາກວ່າຈະເຫັນດີໂດຍລັດຖະບານຂອງປະເທດສະມາຊິກ ຫລື ຜູ້ສະໜັບສະໜຸນໂຄງການເອກະຊົນທີ່ກ່ຽວຂ້ອງ ແລະ ໂດຍທະນາຄານພັດທະນາອາຊີ (ADB).

## ຂ. ຄວາມລັບສຳລັບຜູ້ຮ້ອງຂໍ

18. ຄະນະກຳມະການກວດກາການປະຕິບັດ (CRP) ຈະມີການຮັກສາຊື່ຂອງຜູ້ຮ້ອງທຸກໄວ້ເປັນຄວາມລັບແຕ່ການຮ້ອງທຸກທີ່ບໍ່ມີການອອກຊື່ຜູ້ເຮັດຄຳຮ້ອງເລີຍຈະບໍ່ຖືກຮັບເອົາ.

## ຄ. ຈະຍື່ນຄຳຮ້ອງແນວໃດສຳລັບການກວດກາການປະຕິບັດ

19. ການຮ້ອງຂໍສຳລັບການກວດກາການປະຕິບັດຈະຕ້ອງເຮັດເປັນລາຍລັກອັກສອນ ແລະ ສົ່ງໄປໃຫ້ 'ກອງເລຂາຄະນະກຳມະການກວດກາຄືນການປະຕິບັດ (CRP). ໂດຍທາງໄປສະນີ, ແຟັກ, ອີເມລ, ຫລື ສົ່ງດ້ວຍຕົວເອງເຖິງກອງເລຂາຄະນະກຳມະການກວດກາການປະຕິບັດ (CRP) ທີ່ສຳນັກງານໃຫຍ່ ທະນາຄານພັດທະນາອາຊີ (ADB). ໃນ

ກໍລະນີທີ່ສົ່ງທາງແຟັກ ຫລື ທາງອີເມລ, ຈະຕ້ອງສົ່ງສຳເນົາເອກະສານເຖິງກອງເລຂາການກວດກາການປະຕິບັດເພື່ອເກັບເປັນຫລັກຖານ.

Secretary, Compliance Review Panel
Asian Development Bank
6 ADB Avenue
Mandaluyong City
1550 Metro Manila, Philippines

ໂທລ: +632 632 4149
ແຟັກ: +632 636 2088
ອີເມລ: crp@adb.org

20. ຫ້ອງການທະນາຄານພັດທະນາອາຊີ (ADB) ຈະເປັນຜູ້ຮັບຄຳຮ້ອງ ເຊັ່ນສຳນັກງານທະນາຄານປະຈຳປະ ເທດ ຫລື ຫ້ອງການຕ່າງໜ້າຢູ່ປະເທດຕ່າງໆ, ເຊິ່ງຄຳຮ້ອງທີ່ຍື່ນຈະຖືກສົ່ງໄປໃຫ້ກອງເລຂາການກວດກາການປະຕິບັດ.

**ງ. ຮູບແບບມາດຕະຖານ**

21. ຄຳຮ້ອງສຳລັບການກວດກາການປະຕິບັດຕາມບໍ່ຈຳເປັນຕ້ອງມີຮູບແບບສະເພາະໃດໜຶ່ງ. ຜູ້ຮ້ອງຂໍອາດຈະໃຊ້ແບບຟອມຕົວຢ່າງເຊິ່ງຕິດຄັດຢູ່ເອກະສານຊ້ອນທ້າຍ 1 ເພື່ອເປັນແບບຢ່າງ.

**ຈ. ພາສາ**

22. ກົນໄກການລາຍງານຜົນກະທົບຈາກໂຄງການຂອງ ທະນາຄານພັດທະນາອາຊີ (ADB) ແມ່ນພາສາອັງກິດ, ແຕ່ວ່າຄຳຮ້ອງອາດຈະເຮັດເປັນພາສາທີ່ໃຊ້ເປັນທາງລັດຖະການ ຫລື ພາສາປະຈຳຊາດຂອງບັນດາປະເທດສະມາຊິກຂອງທະນາຄານພັດທະນາອາຊີ, ຖ້າຫາກຜູ້ຮ້ອງທຸກບໍ່ສາມາດເຮັດເປັນພາສາອັງກິດໄດ້. ຖ້າຄຳຮ້ອງທີ່ຍື່ນບໍ່ແມ່ນພາສາອັງກິດ, ອາດຈະໃຊ້ເວລາຫລາຍຂຶ້ນ.

**ສ. ເນື້ອໃນຄຳຮ້ອງໃຫ້ມີການກວດກາການປະຕິບັດ**

23. ຫ້ອງການຄະນະກຳມະການກວດກາການປະຕິບັດ (CRP) ຈະໃຫ້ຄຳແນະນຳຫລືແນວທາງແກ່ບັນດາຜູ້ຮ້ອງຂໍໃນການຍື່ນຄຳຮ້ອງໃຫ້ມີການກວດກາການປະຕິບັດ.

24. ຄຳຮ້ອງໃຫ້ມີການກວດກາການປະຕິບັດຕ້ອງສະແດງເຖິງຂໍ້ຕ່າງໆລຸ່ມນີ້ ແລະ ຖ້າຄຳຮ້ອງມີຂໍ້ມູນບໍ່ຄົບຖ້ວນ, ຄະນະກຳມະການກວດກາການປະຕິບັດ (CRP) ອາດຈະຕ້ອງໄດ້ຊອກຂໍ້ມູນ ແລະ ເອກະສານເພີ່ມເຕີມຈາກຜູ້ຮ້ອງທຸກກ່ອນທີ່ຈະພິຈາລະນາເຖິງຄວາມເໝາະສົມຂອງຄຳຮ້ອງ:

(i) ຜູ້ຍື່ນຄຳຮ້ອງແມ່ນ, ຫລື ອາດຈະ, ໄດ້ຮັບຜົນກະທົບໂດຍກົງທາງດ້ານວັດຖຸ ແລະ ຜົນຮ້າຍຈາກ ໂຄງການຊ່ວຍເຫລືອຂອງທະນາຄານພັດທະນາອາຊີ (ADB);

(ii) ຜູ້ຮ້ອງທຸກກ່າວອ້າງວ່າຜົນຮ້າຍທາງກົງ ແລະທາງດ້ານວັດຖຸນັ້ນແມ່ນ, ຫລື ອາດຈະ, ເກີດຈາກຜົນຂອງການລະເມີດບັນດານະໂຍບາຍ ແລະ ຂະບວນການເຄື່ອນໄຫວຕ່າງໆຂອງທະນາຄານພັດທະນາອາຊີ (ເຊິ່ງໄດ້ບົ່ງແຈ້ງ) ໃນການຂຽນ, ການພິຈາລະນາ, ຫລື ການປະຕິບັດໂຄງການຊ່ວຍເຫລືອຂອງທະນາຄານພັດທະນາອາຊີ (ADB);

(iii) ລາຍລະອຽດຂອງຜົນຮ້າຍທາງກົງ ແລະ ທາງດ້ານວັດຖຸ, ຄື, ສິດທິ ແລະ ຄວາມສົນໃຈ ທີ່ເປັນ ຫລື ອາດຈະເປັນ, ເຊິ່ງໄດ້ຮັບຜົນກະທົບໂດຍກົງ ແລະ ທາງດ້ານວັດຖຸຈາກໂຄງການຊ່ວຍເຫລືອຂອງທະນາຄານພັດທະນາອາຊີ (ADB);

(iv) ຫລັກຖານຂອງຜູ້ຮ້ອງທຸກ ແລະ ຂໍ້ມູນຕິດຕໍ່, ພ້ອມດ້ວຍຄຳຮ້ອງເພື່ອຂໍໃຫ້ຮັກສາເປັນຄວາມລັບ ຖ້າຕ້ອງການ;

(v) ຖ້າຄຳຮ້ອງເຮັດໂດຍຜ່ານຕົວແທນ, ຫລັກຖານຂອງຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການວ່າຄຳຮ້ອງແມ່ນເຮັດຕ່າງໜ້າຜູ້ໃດ ແລະ ຕ້ອງມີຫລັກຖານການມອບສິດໃຫ້ເປັນຕົວແທນ;

(vi) ລາຍລະອຽດໂດຍຫຍໍ້ຂອງໂຄງການຊ່ວຍເຫລືອຂອງທະນາຄານພັດທະນາອາຊີ, ລວມທັງຊື່ ແລະ ທີ່ຕັ້ງຂອງໂຄງການ;

(vii) ຜົນຮັບ ແລະ ການກະກຽມ ເຊິ່ງຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ເຊື່ອວ່າຈະໄດ້ຮັບຈາກທະນາຄານພັດທະນາອາຊີ (ADB) ໃນໄລຍະການກວດກາການປະຕິບັດ;

(viii) ຄຳອະທິບາຍກ່ຽວກັບຜົນໄດ້ຮັບຂອງຜູ້ຮ້ອງທຸກທີ່ພະຍາຍາມກ່າວຄຳຮ້ອງທຸກກັບຜູ້ອຳນວຍຄວາມສະດວກພິເສດສຳລັບໂຄງການ (ຫລື ຖ້າຜູ້ອຳນວຍຄວາມສະດວກພິເສດສຳລັບໂຄງການປະຕິເສດຄຳຮ້ອງທຸກວ່າບໍ່ເໝາະສົມ, ຄຳອະທິບາຍວ່າເປັນຍ້ອນສາຍເຫດໃດຄຳຮ້ອງຄວນຈະຍັງຄົງໄດ້ຮັບການພິຈາລະນາໃຫ້ມີການກວດກາການປະຕິບັດ);

(ix) ຄຳອະທິບາຍຍ້ອນສາຍເຫດໃດຈຶ່ງບໍ່ສາມາດໃຫ້ ຂໍ້ມູນເຫົ່ງນີ້ໄດ້; ແລະ

(x) ບັນຫາອື່ນໆທີ່ກ່ຽວຂ້ອງໂດຍກົງ ຫລື ຂໍ້ມູນຕ່າງໆທີ່ມີເອກະສານອ້າງອີງພ້ອມ.

25. ຄຳຮ້ອງໃຫ້ມີການການກວດກາການປະຕິບັດລວມມີຂໍ້ມູນທີ່ຄ້າຍຄືກັນກັບຂໍ້ມູນທີ່ຕ້ອງການໃນການຮ້ອງທຸກທີ່ຍື່ນກັບຜູ້ອຳນວຍຄວາມສະດວກພິເສດສຳລັບໂຄງການ (SPF), ເຊິ່ງມີຂໍ້ມູນທີ່ຕ້ອງການໃນວັກທີ 24 (vii) ແລະ (viii) ຂອງຂັ້ນຕອນການປະຕິບັດການເຫລົ່ານີ້. ໃນຂະນະທີ່ຜູ້ຮ້ອງທຸກບໍ່ຕ້ອງອ້າງເຖິງການລະເມີດບັນດານະໂຍບາຍສະເພາະຢູ່ໃນຄຳຮ້ອງ, ຜູ້ຮ້ອງທຸກສາມາດກ່າວອ້າງການລະເມີດນະໂຍບາຍທີ່ຜູ້ຮ້ອງທຸກເຊື່ອວ່າມີສາຍພົວພັນກັບເຫດການ ຫລື ການກະທຳຜິດຂອງທະນາຄານຍ້ອນທະນາຄານຂາດການຕິດຕາມນະໂຍບາຍ ແລະ ຂະບວນການ ເຄື່ອນໄຫວຕ່າງໆຂອງທະນາຄານເອງ.

## ຂ. ຂໍ້ຫ້າມ

26. ຄະນະກຳມະການກວດກາການປະຕິບັດ (CRP) ບໍ່ສາມາດພິຈາລະນາຄຳຮ້ອງ:

(i) ສິ່ງທີ່ບໍ່ກ່ຽວຂ້ອງກັບການກະທຳ ຫລື ການກະທຳຜິດຂອງທະນາຄານໃນການຂຽນ, ພິຈາລະນາ, ຫລື ການປະຕິບັດໂຄງການຊ່ວຍເຫລືອຂອງທະນາຄານ;

(ii) ການຕັດສິນໃຈຂອງທະນາຄານພັດທະນາອາຊີ (ADB), ຜູ້ກູ້ຍືມ, ອົງການບໍລິຫານໂຄງການ, ຫລື ຜູ້ສະໜັບສະໜູນໂຄງການເອກະຊົນ, ທີ່ກ່ຽວກັບການຈັດຊື້ສິນຄ້າ ແລະ ການບໍລິການ, ລວມທັງການບໍລິການທີ່ປຶກສາ;

(iii) ການກ່າວຫາການກະທຳຜິດ ຫລື ການສໍ້ໂກງຂອງໂຄງການຊ່ວຍເຫລືອຂອງທະນາຄານພັດທະນາອາຊີ (ADB) ແລະ ໂດຍພະນັກງານທະນາຄານ;

(iv) ໂຄງການຊ່ວຍເຫລືອຂອງທະນາຄານພັດທະນາອາຊີ (ADB) ເຊິ່ງບົດລາຍງານການສຳເລັດໂຄງ ການ[2] ໄດ້ຖືກເຮັດອອກ;

(v) ທີ່ກ່ຽວຂ້ອງກັບບັນຫາທີ່ໄດ້ພິຈາລະນາແລ້ວພາຍໃຕ້ໜ້າທີ່ກວດສອບຜ່ານມາ ຫລື ໂດຍ ຄະນະກຳ ມະການ ກວດກາໃຫ້ມີການປະຕິບັດຕາມ ນອກຈາກວ່າຈະມີເຫດການສຳຄັນອັນໃໝ່ທີ່ສະແດງວ່າບໍ່ໄດ້ຖືກຮັບຮູ້ມາກ່ອນ ເມື່ອເວລາມີຄຳຮ້ອງທຸກທຳອິດ ຫລື ບໍ່ດັ່ງນັ້ນກໍ່ລວມຄຳຮ້ອງທຸກໃໝ່ນີ້ກັບອັນທຳອິດ;

(vi) ກ່ຽວກັບຄວາມພຽງພໍ ຫລື ຄວາມເໝາະສົມຂອງບັນດານະໂຍບາຍ ແລະ ຂະບວນການເຄື່ອນ ໄຫວຕ່າງໆຂອງທະນາຄານພັດທະນາອາຊີ (ADB);

(vii) ຄະນະກຳມະການກວດກາໃຫ້ມີການປະຕິບັດໄດ້ພິຈາລະນາວ່າເປັນເລື່ອງຕະຫລົກ, ເປັນຕາຊັງ, ບໍ່ສຳຄັນ, ຫລື ສ້າງຂຶ້ນເພື່ອເປັນການເອົາປຽບ;

(viii) ໃນຂອບເຂດສິດອຳນາດຂອງຄະນະກຳມະການຮ້ອງຂໍ ຫລື ບໍລິຫານຂອງທະນາຄານ ຫລື ທີ່ກ່ຽວຂ້ອງກັບບັນຫາພະແນກຈັດຕັ້ງຂອງທະນາຄານພັດທະນາອາຊີ (ADB);

(ix) ທີ່ກ່ຽວຂ້ອງເຖິງເຫດການທີ່ຢູ່ໃນຄວາມຮັບຜິດຊອບຂອງຝ່າຍອື່ນ, ເຊັ່ນ ຜູ້ກູ້ຢືມ, ສຳນັກງານປະຕິບັດຊ່ວຍໂຄງການ, ຫລື ຜູ້ອາດກູ້ຢືມ, ນອກຈາກວ່າການປະຕິບັດຂອງຝ່າຍດັ່ງກ່າວແມ່ນສອດຄ່ອງໂດຍກົງກັບການສຳລວດຄືນຂອງການກວດກາການປະຕິບັດຕາມກັບບັນດານະໂຍບາຍ ແລະ ຂະບວນການເຄື່ອນໄຫວຕ່າງໆຂອງທະນາຄານພັດທະນາອາຊີ (ADB);

(x) ກ່ຽວກັບບັນຫາທີ່ບໍ່ນັບເຫດການ ຫລື ການປະລະການຕິດຕາມການປະຕິບັດບັນດາະນໂຍບາຍ ແລະ ຂະບວນການເຄື່ອນໄຫວຕ່າງໆຂອງທະນາຄານພັດທະນາອາຊີ (ADB);

(xi) ກ່ຽວກັບກົດໝາຍ, ນະໂຍບາຍ, ແລະ ກົດລະບຽບຂອງອົງການບໍລິຫານໂຄງການ ຫລື ລັດຖະບານຂອງປະເທດສະມາຊິກຂອງທະນາຄານພັດທະນາອາຊີ (ADB) ທີ່ກ່ຽວຂ້ອງ ນອກຈາກວ່າມັນກ່ຽວຂ້ອງໂດຍກົງກັບການປະຕິບັດຕາມຂອງທະນາຄານກັບບັນດານະໂຍບາຍ ແລະ ຂະບວນການ ເຄື່ອນໄຫວຕ່າງໆຂອງທະນາຄານພັດທະນາອາຊີ (ADB);

(xii) ກ່ຽວພັນກັບໂຄງການເອກະຊົນທີ່ໄດ້ຮັບອະນຸມັດກ່ອນວັນທີ 29 ເມສາ 2003; ແລະ/ຫລື

(xiii) ເມື່ອຄຳຮ້ອງທຸກຍັງບໍ່ທັນໄດ້ຍື່ນກັບ ຜູ້ອຳນວຍຄວາມສະດວກພິເສດສຳລັບໂຄງການ (ຂໍ້ຫ້າມນີ້ບໍ່ໃຊ້ກັບຄຳຮ້ອງຈາກສະມາຊິກຄະນະບໍລິຫານ.)

27. ໃນກໍລະນີທີ່ຄຳຮ້ອງທີ່ຢູ່ໃນວັກທີ 26 (ii), (iii) ແລະ (viii) ຂອງຂະບວນການເຄື່ອນໄຫວຕ່າງໆເຫລົ່ານີ້, ຄະນະກຳມະການກວດກາການປະຕິບັດ (CRP) ຈະແຈ້ງໃຫ້ຜູ້ຮ້ອງທຸກເພື່ອສະເໜີບັນຫາກັບໜ່ວຍຕໍ່ຕ້ານການສໍ້ໂກງຂອງທະນາຄານພັດທະນາອາຊີ (ADB), ຫ້ອງການກວດສອບບັນຊີ; ສູນກາງ ຫ້ອງການ ການບໍລິການການປະຕິບັດການ, ຝ່າຍງົບປະມານ, ຝ່າຍຈັດຕັ້ງ, ແລະ ລະບົບການບໍລິຫານ, ຕາມລຳດັບ.

---

[2] ບົດລາຍງານການສຳເລັດໂຄງການຈະຖືກເຮັດໂດຍທະນາຄານພັດທະນາອາຊີ (ADB) ພາຍໃນ 1-2 ປີ ຫລັງຈາກທີ່ໂຄງການໄດ້ສຳເລັດ ແລະ ໄດ້ປະຕິບັດແລ້ວ. ໃນກໍລະນີໂຄງການພາກສ່ວນເອກະຊົນ, ເຊິ່ງບົດລາຍງານການສຳເລັດໂຄງການບໍ່ໄດ້ຖືກເຮັດອອກນັ້ນ, ກຳນົດວັນທີສຳເລັດແມ່ນ 2 ປີ ຫລັງຈາກທີ່ໂຄງການສຳເລັດ ແລະ ເລີ້ມປະຕິບັດ; ຫລືວ່າການສິ້ນສຸດໂຄງການໄດ້ຖືກຍົກເວັ້ນ ຫລື ບໍ່ມີສ່ວນກ່ຽວຂ້ອງ (ເຊັ່ນໂຄງການທີ່ກ່ຽວກັບສະຖາບັນການເງິນ), ແມ່ນ 1 ປີ ຫລັງຈາກວັນທີທີ່ມີການຈ່າຍເງິນອອກງວດສຸດທ້າຍ ຫລື ການສິ້ນສຸດການເຂົ້າຮ່ວມຂອງທະນາຄານ ພັດທະນາອາຊີ (ADB), ອັນໃດອັນໜຶ່ງທີ່ເກີດຂຶ້ນກ່ອນ.

## III. ຂັ້ນຕອນການປະຕິບັດການກວດກາໃຫ້ມີການປະຕິບັດຕາມ

### ກ. ບາດກ້າວຂັ້ນຕອນການປະຕິບັດ ແລະ ຂອບເຂດເວລາ

28. ລຸ່ມນີ້ແມ່ນບາດກ້າວຂັ້ນຕອນການປະຕິບັດການ ແລະ ຂອບເຂດເວລາສຳລັບຂັ້ນຕອນການກວດກາການປະຕິບັດ (ເບິ່ງແຜນວາດໃນເອກະສານຊ້ອນທ້າຍ 2). "ມື້" ທັງໝົດທີ່ອ້າງເຖິງໃນຂັ້ນຕອນການປະຕິບັດການນີ້ແມ່ນໝາຍເຖິງມື້ປະຕິທິນ. ຍົກເວັ້ນຄຳຮ້ອງທີ່ຍື່ນໂດຍສະມາຊິກຄະນະບໍລິຫານ, ອີງຕາມຂັ້ນຕອນທີ່ຕັ້ງໂດຍຜູ້ອຳນວຍຄວາມສະດວກພິເສດສຳລັບໂຄງການ (SPF) ທຸກໆຄຳຮ້ອງຈະຕ້ອງຍື່ນກັບຜູ້ອຳນວຍຄວາມສະດວກພິເສດສຳລັບໂຄງການ (SPF) ໂດຍຜ່ານໄລຍະການປຶກສາຫາລື.

29. **ບາດກ້າວ 1: ການຍື່ນຄຳຮ້ອງ.** ຄຳຮ້ອງສຳລັບການກວດກາໃຫ້ມີການປະຕິບັດຕາມແມ່ນຍື່ນເຖິງຄະນະກຳມະການກວດກາການປະຕິບັດຕາມ.

30. **ບາດກ້າວ 2: ການລົງທະບຽນ ແລະ ການຮັບຮູ້ຄຳຮ້ອງ.** ພາຍໃນ 7 ວັນຈາກວັນທີ່ໄດ້ຮັບຄຳຮ້ອງພ້ອມກັບຂໍ້ມູນທີ່ຈຳເປັນ, ຄະນະກຳມະການກວດກາໃຫ້ມີການປະຕິບັດຕາມຈະ:

(i) ລົງທະບຽນຄຳຮ້ອງຢູ່ບ່ອນລົງທະບຽນທີ່ທຸກຄົນສາມາດລົງທະບຽນໄດ້ຢູ່ເວັບໄຊທຂອງ ການກວດກາການປະຕິບັດຕາມ;
(ii) ຮັບເອົາຄຳຮ້ອງ;
(iii) ແຈ້ງໃຫ້ຄະນະຊາບວ່າຄຳຮ້ອງໄດ້ຖືກລົງທະບຽນແລ້ວ; ແລະ
(iv) ແຈ້ງໃຫ້ພະແນກຂ່າວສານຮູ້ວ່າພວກເຂົາໄດ້ລົງທະບຽນຄຳຮ້ອງແລ້ວ.

31. **ບາດກ້າວ 3: ການພິຈາລະນາຄວາມຖືກຕ້ອງຂອງຄຳຮ້ອງ.** ໂດຍບໍ່ຄຳນຶງເຖິງການພິຈາລະນາຄວາມ ເໝາະສົມຂອງຜູ້ອຳນວຍຄວາມສະດວກພິເສດສຳລັບໂຄງການ (SPF), ຄະນະກຳມະການກວດກາໃຫ້ມີການປະຕິບັດ (CRP) ຈະພິຈາລະນາວ່າຄຳຮ້ອງຈະຖືກຕ້ອງກັບເງື່ອນໄຂທີ່ວາງໄວ້ຫລືບໍ່. ພາຍໃນ 14 ວັນຈາກວັນລົງທະບຽນ, ຄະນະກຳມະການກວດກາການປະຕິບັດ (CRP) ຈະຕັດສິນຄວາມເໝາະສົມຂອງຄຳຮ້ອງ ແລະ ຈະແຈ້ງຜູ້ຮ້ອງທຸກຊາບກ່ຽວກັບການຕັດສິນໃຈ. ຖ້າຫາກວ່າຜູ້ອຳນວຍຄວາມສະດວກພິເສດສຳລັບໂຄງການ (SPF) ໄດ້ພິຈາລະນາແລ້ວວ່າຄຳຮ້ອງທຸກນັ້ນບໍ່ຖືກຕ້ອງເໝາະສົມສຳລັບໄລຍະການປຶກສາຫາລື, ຄະນະກຳມະການກວດກາ ໃຫ້ມີການປະຕິບັດຕາມຈະຕັດສິນຄວາມເໝາະສົມຂອງຄຳຮ້ອງພາຍໃນ 21 ວັນນັບຈາກວັນທີ່ລົງທະບຽນໃຫ້ມີການ ກວດກາການປະຕິບັດຕາມ.

32. ຖ້າວ່າຜູ້ອຳນວຍຄວາມສະດວກພິເສດສຳລັບໂຄງການ (SPF) ໄດ້ພິຈາລະນາວ່າຄຳຮ້ອງທຸກນັ້ນຖືກຕ້ອງຕາມມາດຕະຖານທີ່ໄດ້ວາງໄວ້ສຳລັບໄລຍະການປຶກສາຫາລື, ຄະນະກຳມະການກວດກາໃຫ້ມີການປະຕິບັດກໍ່ຈະພິຈາລະນາເບິ່ງວ່າຄຳຮ້ອງທີ່ຍື່ນນັ້ນແມ່ນມີຜົນຮ້າຍໂດຍກົງ ແລະ ທາງດ້ານວັດຖຸດັ່ງທີ່ຜູ້ຮ້ອງທຸກໄດ້ກ່າວອ້າງວ່າມີສ່ວນພົວພັນກັບການປະລະບໍ່ເຮັດຕາມນະໂຍບາຍ ແລະ ຂະບວນການເຄື່ອນໄຫວໃນການຂຽນ, ການພິຈາລະນາ, ຫລືການປະຕິບັດໂຄງການຊ່ວຍເຫລືອຂອງທະນາຄານພັດທະນາອາຊີ (ADB). ຄະນະກຳມະການກວດກາໃຫ້ມີການປະຕິບັດຕາມຈະໄດ້ຮັບວັດຖຸຕ່າງໆ ແລະ ວິໃຈເບິ່ງການພົວພັນກັບຄຳຮ້ອງທຸກໃນໄລຍະການປຶກສາ ຫາລື ຈາກຜູ້ອຳນວຍ

ຄວາມສະດວກພິເສດສຳລັບໂຄງການ (SPF), ລວມທັງການພິຈາລະນາຄວາມເໝາະສົມໃນການ ຄັດເລືອກຂອງຜູ້ອຳນວຍຄວາມສະດວກພິເສດສຳລັບໂຄງການ (SPF).

33. ຖ້າຜູ້ຮ້ອງທຸກບໍ່ກ່າວອ້າງການລະເມີດນະໂຍບາຍສະເພາະອັນໃດໜຶ່ງ, ຄະນະກຳມະການກວດກາການປະຕິ ບັດ (CRP) ຈະກວດຄືນຄຳຮ້ອງເບິ່ງຖ້າວ່າ, ໃນຄວາມຄິດເຫັນຂອງເຂົາເຈົ້າ, ຄຳຮ້ອງໄດ້ຍົກເອົາບັນຫາກ່ຽວກັບການລະເມີດນະໂຍບາຍໃນອະນາຄົດຫລືບໍ່. ໃນໄລຍະການພິຈາລະນາຄວາມເໝາະສົມ, ຄະນະກຳມະການກວດກາການປະຕິບັດ (CRP) ອາດຈະປຶກສາຫາລືກັບພາກສ່ວນກ່ຽວຂ້ອງ, ລວມທັງຝ່າຍບໍລິຫານ ແລະ ພະນັກງານ, ຜູ້ຮ້ອງຂໍ, ສຳນັກງານຜູ້ປະສານງານ ຫລື ລັດຖະບານຂອງປະເທດສະມາຊິກ ຫລື ຜູ້ສະໜັບສະໜູນໂຄງການ ເອກະຊົນ, ແລະ ສະມາຊິກຄະນະບໍລິຫານຂອງປະເທດທີ່ກ່ຽວຂ້ອງ. ການພິຈາລະນາຄວາມເໝາະສົມນັ້ນລວມມີ ການກວດກາເອກະ ສານ ແລະ/ຫລື ລົງຢ້ຽມຢາມສະໜາມ.

34. ຄະນະກຳມະການກວດກາການປະຕິບັດ (CRP) ຈະສົ່ງບົດລາຍງານກ່ຽວກັບການພິຈາລະນາຄວາມເໝາະສົມຂອງຄຳຮ້ອງໃຫ້ຄະນະຜູ້ບໍລິຫານ. ຖ້າວ່າຄະນະກຳມະການກວດກາການປະຕິບັດ (CRP) ພິຈາລະນາແລ້ວວ່າຄຳຮ້ອງບໍ່ເໝາະສົມ, ພວກເຂົາຈະແຈ້ງຄະນະບໍລິຫານຊາບວ່າຄຳຮ້ອງບໍ່ເໝາະສົມ. ຖ້າວ່າຄະນະກຳມະການກວດກາການປະຕິບັດ (CRP) ພິຈາລະນາວ່າຄຳຮ້ອງເໝາະສົມ, ພວກເຂົາຈະແນະນຳໃຫ້ກັບຄະນະບໍລິຫານວ່າການກວດກາການປະຕິບັດຕາມຄວນຖືກອະນຸມັດ. ບົດລາຍງານນັ້ນລວມມີ:

- (i) ລັກສະນະຂອງຄຳຮ້ອງ ແລະ ຂໍ້ມູນສະໜັບສະໜູນທຸກຢ່າງເຊິ່ງສະໜອງໂດຍຜູ້ຮ້ອງຂໍ;
- (ii) ຄຳອະທິບາຍກ່ຽວກັບການຄົ້ນຄົ້ວຄວາມເໝາະສົມຂອງຄຳຮ້ອງຂອງຄະນະກຳມະການກວດກາການປະຕິບັດ (CRP); ແລະ
- (iii) ຄຳແນະນຳໃຫ້ອະນຸມັດຄຳຮ້ອງຖ້າວ່າຄະນະກຳມະການກວດກາການປະຕິບັດພິຈາລະນາວ່າຄຳຮ້ອງມີຄວາມເໝາະສົມ.

35. **ບາດກ້າວ 4: ການອະນຸມັດການກວດກາການປະຕິບັດຂອງຄະນະບໍລິຫານ.** ພາຍໃນ 21 ວັນຈາກວັນທີ່ໄດ້ຮັບຄຳເຫັນຈາກຄະນະກຳມະການການກວດກາການປະຕິບັດ, ຄະນະບໍລິຫານຈະອະນຸມັດການກວດກາການປະຕິບັດໂດຍບໍ່ມີການຂັດແຍ່ງ ແລະ ບໍ່ມີການວິຈານຂໍ້ດີຕ່າງໆ ຂອງຄຳຮ້ອງ. ພາຍໃນ 7 ວັນຈາກວັນທີ່ໄດ້ຮັບໃບອະນຸມັດຈາກຄະນະບໍລິຫານ, ຜູ້ຮ້ອງທຸກຈະຖືກແຈ້ງການຕັດສິນ ຂອງຄະນະບໍລິຫານໃນການອະນຸມັດໃຫ້ມີການກວດກາການປະຕິບັດ, ແລະ ການຕັດສິນດັ່ງກ່າວຈະຖືກໃສ່ໃນເວັບໄຊທ໌ຂອງການກວດກາການປະຕິບັດ.

36. **ບາດກ້າວ 5: ການດຳເນີນການກວດກາການປະຕິບັດ.** ເມື່ອຄະນະກຳມະການໄດ້ອະນຸມັດການກວດກາ ແລ້ວ, ຄະນະກຳມະການກວດກາການປະຕິບັດຕາມກໍ່ເລີ້ມຂະບວນການກວດກາທັນທີ. ການກວດກາຂອງຄະນະກຳມະການກວດກາການປະຕິບັດຈະບໍ່ເປັນເວລາທີ່ແນ່ນອນ, ເພາະວ່າຈຳນວນເວລາຂອງການກວດກາຈະຕ່າງກັນຂຶ້ນກັບລັກສະນະ, ຄວາມຫຍຸ້ງຍາກ ແລະ ຂອບເຂດຂອງໂຄງການ ແລະ ການລະເມີດບັນດານະໂຍບາຍຕ່າງໆ. ຄະນະກຳມະການກວດກາການປະຕິບັດ (CRP) ຈະດຳເນີນການກວດກາຢ່າງໄວວາ.

37. ເມື່ອຄະນະກຳມະການກວດກາການປະຕິບັດ (CRP) ໄດ້ຮັບການອະນຸມັດຈາກຄະນະບໍລິຫານແລ້ວ, ປະທານກວດກາການປະຕິບັດຈະ (i) ມອບໝາຍໃຫ້ສະມາຊິກຄະນະການກວດກາການປະຕິບັດ 1 ທ່ານເພື່ອຮັບ

ຜິດຊອບເບິ່ງແຍງການກວດກາໃນເບື້ອງຕົ້ນ; ແລະ (ii) ໃຫ້ສະມາຊິກຂອງການກວດກາທຸກຄົນກະກຽມສະເໜີບົດກຳນົດໜ້າວຽກ, ລວມທັງຂອບເຂດຂອງການກວດກາ, ວິທີການ ແລະ ກຳນົດເວລາ. ເພື່ອອຳນວຍຄວາມສະດວກໃຫ້ຄະນະກຳມະການສະພາບໍລິຫານອະນຸມັດໄວຂຶ້ນ, ຄະນະກຳມະການກວດກາການປະຕິບັດຈະມອບບົດ ກຳນົດໜ້າວຽກ (TOR) ຂອງພວກເຂົາໃຫ້ຄະນະກຳມະການສະພາບໍລິຫານໄວເທົ່າທີ່ຈະໄວໄດ້ຫລັງຈາກທີ່ຄະນະບໍລິຫານໄດ້ອະນຸມັດການກວດກາແລ້ວ, ແລະ ຈະໃຫ້ຄະນະກຳມະການ ສະພາບໍລິຫານມີເວລາພຽງພໍສຳລັບການພິຈາ ລະນາ. ຄະນະກຳມະການກວດກາການປະຕິບັດ (CRP) ຈະຕົກລົງເຫັນດີນຳກັນກັບຄະນະກຳມະການສະພາບໍ ລິຫານເລື່ອງໜ້າວຽກ ແລະ ຂອບເຂດເວລາກ່ອນທີ່ຄະນະກຳມະການກວດກາຈະເຜີຍແຜ່. ພາຍໃນ 14 ວັນ ຈາກວັນທີ່ໄດ້ຮັບການອະນຸມັດຈາກຄະນະບໍລິຫານໃຫ້ມີການກວດກາ, ຄະນະກຳມະການກວດກາການປະຕິບັດ (CRP) ຈະແຈ້ງໃຫ້ຊາບເຖິງໜ້າທີ່ປະຕິບັດ ແລະ ຂອບເຂດເວລາເຊິ່ງຈະບົ່ງບອກເຖິງວິທີການ ແລະ ໄລຍະເວລາຂອງການກວດກາ. ຈະແຈ້ງ ໜ້າທີ່ຮັບຜິດຊອບ ແລະ ຂອບເຂດເວລາໃຫ້ຄະນະບໍລິຫານ ແລະ ພາກສ່ວນທີ່ກ່ຽວຂ້ອງ, ແລະ ຈະເອົາຂຶ້ນ ເວັບໄຊທ໌ຂອງການກວດການການປະຕິບັດ.

38. ການກວດກາໂດຍຄະນະກຳມະການການກວດກາການປະຕິບັດ (CRP) ອາດຈະລວມມີບາດກ້າວດັ່ງນີ້, ຂຶ້ນກັບລັກສະນະພິເສດຂອງຄຳຮ້ອງ:

- (i) ການປຶກສາຫາລືກັບທຸກພາກສ່ວນທີ່ກ່ຽວຂ້ອງ, ສະມາຊິກຄະນະບໍລິຫານຂອງປະເທດທີ່ກ່ຽວຂ້ອງ ແລະ ຜູ້ຕາງໜ້າຂອງອົງການທີ່ບໍ່ຂຶ້ນກັບລັດ, ທຸກພາກສ່ວນນີ້ແມ່ນມີໂອກາດທີ່ຈະມີຄວາມຄິດເຫັນ ຂອງຕົນເອງ;
- (ii) ການກວດຄືນເອກະສານທີ່ຍື່ນກັບທະນາຄານພັດທະນາອາຊີ (ADB);
- (iii) ລົງຢັ້ງຢາມສະໜາມເພື່ອເຮັດການສືບສວນໃນຂະນະທີ່ດຳເນີນການກວດກາ;
- (iv) ຈັດການສືບສວນຕໍ່ມະຫາຊົນໃນເຂດໂຄງການ;
- (v) ຈ້າງທີ່ປຶກສາເພື່ອຊ່ວຍວຽກຂອງຄະນະກຳມະການກວດກາການປະຕິບັດ (CRP); ແລະ
- (vi) ການນຳໃຊ້ວິທີການສືບສວນໃດກໍ່ໄດ້ທີ່ຄະນະກຳມະການກວດກາຄິດວ່າເໝາະສົມແກ່ການປະຕິບັດວຽກງານຂອງພວກເຂົາ.

39. ກ່ອນການຢ້ຽມຢາມສະໜາມ, ຄະນະກຳມະການກວດກາຄວນຈະໄດ້ຮັບການອະນຸຍາດຈາກປະເທດທີ່ກ່ຽວ ຂ້ອງ ຫລື ຜູ້ສະໜັບສະໜູນໂຄງການ ເອກະຊົນ, ຕາມຄວາມເໝາະສົມ.

40. **ບາດກ້າວ 6: ຮ່າງບົດລາຍງານການກວດກາການປະຕິບັດ.** ຫລັງຈາກສິ້ນສຸດການກວດກາແລ້ວ, ຄະນະກຳມະການກວດກາການປະຕິບັດຈະອອກຮ່າງບົດລາຍງານກ່ຽວກັບການຄົ້ນຄ້ວ ແລະ ຄຳແນະນຳໃຫ້ຝ່າຍ ບໍລິຫານ ແລະ ຜູ້ຮ້ອງຂໍໃຫ້ມີຄຳເຫັນ.

41. **ບາດກ້າວ 7: ການມີຄຳເຫັນຂອງຝ່າຍບໍລິຫານ ແລະ ຂອງຜູ້ຮ້ອງຂໍຕໍ່ຮ່າງບົດລາຍງານຂອງການກວດກາການປະຕິບັດ.** ທັງຝ່າຍບໍລິຫານ ແລະ ຜູ້ຮ້ອງຂໍ ມີເວລາ 30 ວັນນັບຈາກວັນທີ່ໄດ້ຮັບຮ່າງບົດລາຍງານ ເພື່ອທີ່ຈະມີຄຳຄິດຄຳເຫັນ. ແຕ່ລະຝ່າຍມີສິດທີ່ຈະໃຫ້ຄຳເຫັນຕໍ່ຮ່າງບົດລາຍງານ, ແຕ່ວ່າມີແຕ່ຄຳເຫັນຂອງຄະນະກຳມະການກວດກາການປະຕິບັດ (CRP) ອັນລ້າສຸດເທົ່ານັ້ນທີ່ຈະມີຜົນຕໍ່ບົດລາຍງານສຸດທ້າຍ.

42. **ບາດກ້າວ 8: ບົດລາຍງານສຸດທ້າຍຂອງການກວດກາການປະຕິບັດ.** ພາຍໃນ 14 ວັນນັບຈາກວັນທີ່ໄດ້ຮັບຄໍາເຫັນຕໍ່ຮ່າງບົດລາຍງານການກວດກາການປະຕິບັດຈາກຝ່າຍບໍລິຫານ ແລະ ຜູ້ຮ້ອງຂໍ, ຄະນະກໍາມະການການກວດກາການປະຕິບັດ (CRP) ຈະພິຈາລະນາຄໍາເຫັນຂອງພວກເຂົາ ແລະ ຈະປັ່ງປູງແປງຕາມຄວາມຈໍາເປັນ ແລະ ເໝາະສົມກ່ອນທີ່ຈະສົ່ງບົດລາຍງານສຸດທ້າຍໃຫ້ຄະນະບໍລິຫານພ້ອມກັບການຄົ້ນຄ້ວາ ແລະ ຄໍາແນະນໍາເພື່ອໃຫ້ແນ່ໃຈວ່າການຕົກລົງກັນຂອງໂຄງການ, ລວມທັງຄໍາແນະນໍາ, ເພື່ອການປັບປຸງແປງທີ່ຖືກ ຕ້ອງຂອງຂອບເຂດ ຫລື ການປະຕິບັດຂອງໂຄງການຖ້າຫາກເຫັນວ່າເໝາະສົມ.

43. ບົດລາຍງານສຸດທ້າຍຂອງການກວດກາການປະຕິບັດຕາມລວມມີຂໍ້ດັ່ງລຸ່ມນີ້:

(i) ລາຍລະອຽດຂອງຄໍາຮ້ອງ, ຂໍ້ມູນທີ່ກ່ຽວພັນກັນ, ແລະບັນດາບາດກ້າວໃນການກວດກາ;

(ii) ຂໍ້ມູນທີ່ຫາໄດ້ ແລະ ຄໍາແນະນໍາຂອງການກວດການການປະຕິບັດ; ແລະ

(iii) ຄໍາເຫັນສ່ວນໃຫຍ່ ແລະ ສິ່ງເລັກນ້ອຍ, ໂດຍທີ່ບໍ່ຄໍານຶງເຖິງການເຫັນດີຂອງຂໍ້ມູນທີ່ຊອກໄດ້ ແລະ ຄໍາແນະນໍາຂອງການກວດກາການປະຕິບັດ.

44. ຄະນະກໍາມະການກວດກາການປະຕິບັດ (CRP) ຈະອອກເປັນເອກະສານຊ້ອນທ້າຍຢູ່ບົດລາຍງານສຸດທ້າຍ ດັ່ງລຸ່ມນີ້:

(i) ຄໍາເຫັນຈາກຝ່າຍບໍລິຫານ ແລະ ຜູ້ຮ້ອງຂໍ; ແລະ

(ii) ລາຍຊື່ເອກະສານສະໜັບສະໜຸນເຊິ່ງຈະມີໃຫ້ເມື່ອເວລາທີ່ຄະນະກໍາມະການກວດຄໍາຮ້ອງ.

45. **ບາດກ້າວ 9: ການຕັດສິນໃຈຂອງຄະນະບໍລິຫານ.** ພານໃນ 21 ວັນຈາກວັນທີ່ຄະນະກໍາມະການກວດການການປະຕິບັດ (CRP) ໄດ້ຮັບບົດລາຍງານສຸດທ້າຍ, ຄະນະບໍລິຫານຈະພິຈາລະນາບົດລາຍງານ ແລະ ຕັດສິນໃຈຄັ້ງສຸດທ້າຍກ່ຽວກັບຄໍາແນະນໍາຕ່າງໆວ່າຈະເຮັດໃຫ້ໂຄງການມີຜົນສໍາເລັດ ແລະ/ຫລື ເຮັດໃຫ້ຜົນເສຍຫາຍໜ້ອຍລົງແນວໃດ ຖ້າເໝາະສົມ. ແຈ້ງໃຫ້ຜູ້ຮ້ອງຂໍຊາບພາຍໃນ 7 ວັນຈາກວັນທີ່ຄະນະບໍລິຫານໄດ້ຕັດສິນໃຈ, ການຕັດສິນຂອງຄະນະ ບໍລິຫານ ແລະ ບົດລາຍງານຂອງການກວດກາການປະຕິບັດ, ກັບຄໍາຕອບຮັບຕິດຂັດມານໍາ, ແລະ ຈາກນັ້ນຈະເອົາຂຶ້ນເວັບໄຊທ໌ ຂອງການກວດການການປະຕິບັດ.

## IV. ການປະຕິບັດການແກ້ໄຂຂໍ້ຜິດພາດ

46. ທຸກໆການປະຕິບັດການແກ້ໄຂຂໍ້ຜິດພາດໃນຂອບເຂດຂອງໂຄງການ ຫລື ການປະຕິບັດໂຄງການເຊິ່ງອະນຸມັດໂດຍຄະນະບໍລິຫານ (ຫລື, ຖ້າຈໍາເປັນ, ເລື່ອນ ຫລື ຍົກເລີກໂຄງການ) ຈະຖືກດໍາເນີນຕາມບັນດາຂັ້ນຕອນຕ່າງໆຂອງທະນາຄານພັດທະນາອາຊີ (ເຊິ່ງຈະຕ້ອງໄດ້ຂໍອະນຸມັດຈາກຜູ້ກູ້ຢືມ ຫລື ຜູ້ໄດ້ຮັບການຊ່ວຍເຫລືອທີ່ກ່ຽວຂ້ອງ ຫລື ຜູ້ສະໜັບສະໜຸນໂຄງການເອກະຊົນທີ່ກ່ຽວຂ້ອງ, ຍົກເວັ້ນຖ້າກ່າວໄວ້ໃນກົດລະບຽບການກູ້ຢືມຂອງທະນາຄານ ພັດທະນາອາຊີ, ທີ່ປະຕິບັດມາ, ຫລື ເອກະສານທາງການອື່ນໆ).

### ກ. ການຄວບຄຸມດູແລການປະຕິບັດໂຄງການຂອງບັນດາການປະຕິບັດການແກ້ໄຂຂໍ້ຜິດພາດ

47. ຄະນະກໍາມະການກວດກາການປະຕິບັດ (CRP) ຈະຄວບຄຸມບັນດາການປະຕິບັດການແກ້ໄຂຂໍ້ຜິດພາດທີ່ອະນຸມັດໂດຍຄະນະບໍລິຫານສໍາລັບການກວດກາການປະຕິບັດ. ນອກຈາກວ່າຄະນະບໍລິຫານມີຕາຕະລາງເວລາທີ່ຕ່າງກັນ,

ຄະນະກຳມະການກວດກາການປະຕິບັດ (CRP) ຈະລາຍງານເປັນປົກກະຕິເທົ່າທີ່ຕ້ອງການ ຫລື ຢ່າງໜ້ອຍທຸກໆປີໃນໄລຍະເວລາ 5 ປີ ໃຫ້ແກ່ຄະນະບໍລິຫານ ກ່ຽວກັບການປະຕິບັດການຕັດສິນຂອງຄະນະບໍລິຫານທີ່ກ່ຽວຂ້ອງກັບມາດຕະການແກ້ໄຂຂໍ້ຜິດພາດລວມທັງການພິ ຈາລະນາຄວາມຄືບໜ້າທີ່ໃນການເຮັດໃຫ້ໂຄງການສອດຄ່ອງກັບນະໂຍບາຍ. ຫລັງຈາກ 5 ປີ, ຄະນະກຳມະການ ກວດກາການປະຕິບັດ (CRP) ອາດຈະແນະນຳໃຫ້ມີການຄວບຄຸມໂຄງການຕື່ມອີກຖ້າເຫັນວ່າຈຳເປັນ. ວິທີການ ຕິດຕາມດັ່ງກ່າວອາດຈະລວມມີດັ່ງນີ້:

(i) ການປຶກສາຫາລືກັບພາກສ່ວນກ່ຽວຂ້ອງ ແລະ ສະມາຊິກຄະນະບໍລິຫານ;
(ii) ກວດກາເອກະສານຄືນ;
(iii) ຢ້ຽມຢາມສະໜາມ; ແລະ
(iv) ທຸກຂໍ້ມູນທີ່ໄດ້ຮັບຈາກຜູ້ຮ້ອງຂໍ ແລະຈາກປະຊາຊົນກ່ຽວກັບສະຖານະພາບຂອງການປະຕິບັດການ.

### ຂ. ຮ່າງບົດລາຍງານການຕິດຕາມ

48. ຄະນະກຳມະກວດກາການປະຕິບັດ (CRP) ຈະສົ່ງບົດລາຍງານການຕິດຕາມໃຫ້ກັບຄະນະກຳມະການ ບໍລິຫານການກວດກາການປະຕິບັດເພື່ອກວດຄືນ. ຄະນະກຳມະການບໍລິຫານການກວດກາການປະຕິບັດຈະໃຫ້ຄຳ ເຫັນກ່ຽວກັບຮ່າງບົດລາຍງານການຕິດຕາມພາຍໃນ 21 ວັນ ຫລັງຈາກທີ່ໄດ້ຮັບບົດລາຍງານດັ່ງກ່າວ. ຄະນະກຳມະ ການກວດກາຈະກວດບົດລາຍເທື່ອສຸດທ້າຍໂດຍປຶກສາຫາລືກັບຄະນະກຳມະການບໍລິຫານການກວດກາການປະຕິ ບັດກ່ອນທີ່ຈະເປີດເຜີຍຕໍ່ບັນດາພາກສ່ວນທີ່ກ່ຽວຂ້ອງ ແລະ ມະຫາຊົນ.

### ຄ. ບົດລາຍງານການຕິດຕາມ

49. ບົດລາຍງານການຕິດຕາມຂອງຄະນະກຳມະການກວດກາການປະຕິບັດ (CRP) ລວມມີດັ່ງນີ້:

(i) ບົດສະຫລຸບຂອງຄຳຮ້ອງໃນເບື້ອງຕົ້ນ ແລະ ການຕັດສິນຂອງຄະນະບໍລິຫານຕໍ່ຄຳຮ້ອງນັ້ນ;
(ii) ບົດສະຫລຸບທຸກຂໍ້ມູນທີ່ຜູ້ຮ້ອງທຸກ, ພາກສ່ວນກ່ຽວຂ້ອງ, ແລະ ຝ່າຍທີ່ມີຄວາມສົນໃຈອື່ນເປັນຜູ້ ຫາໃຫ້;
(iii) ຂໍ້ມູນຕ່າງໆທີ່ກ່ຽວກັບສະຖານະພາບຂອງການປະຕິບັດການຕັດສິນຂອງຄະນະບໍລິຫານ; ແລະ
(iv) ທຸກຄຳແນະນຳເພີ່ມເຕີມໂດຍຄະນະບໍລິຫານ ທີ່ຈຳເປັນແກ່ການດຳເນີນການກວດກາໂຄງການ.

## V. ການເຂົ້າຮ່ວມຂອງຜູ້ຮ້ອງທຸກ ແລະ ຝ່າຍອື່ນໆ

### ກ. ເງື່ອນໄຂຂອງຂໍ້ມູນ

50. ຄະນະກຳມະການກວດກາການປະຕິບັດ (CRP) ຊຸກຍູ້ຜູ້ຮ້ອງຂໍ ແລະ ຜູ້ທີ່ສົນໃຈໃຫ້ຂໍ້ມູນແກ່ພວກເຂົາໃນ ຂັ້ນຕອນການກວດກາການປະຕິບັດ.

## ຂ. ການກວດຄຳຮ້ອງຄືນ

51. ຖ້າເມື່ອໃດທີ່ຜູ້ຮ້ອງຂໍໄດ້ຮັບຫລັກຖານໃໝ່ທີ່ສຳຄັນຫລັງຈາກທີ່ຍື່ນຄຳຮ້ອງແລ້ວ ເຊິ່ງຕ້ອງແມ່ນກ່ອນການອະນຸມັດຂອງຄະນະບໍລິຫານ, ຜູ້ຮ້ອງຂໍອາດຈະກວດກາຄືນ ແລະ ຍື່ນຄຳຮ້ອງໃໝ່. ຖ້າຍື່ນຄຳຮ້ອງໃໝ່ແລ້ວ, ແລະ ຄະນະກຳມະການກວດກາການປະຕິບັດຕາມເຫັນວ່າຫລັກຖານອັນໃໝ່ມີຄວາມສຳຄັນ, ໄລຍະເວລາໃນການພິຈາລະນາຄວາມເໝາະສົມ ຄະນະບໍລິຫານການກວດກາການປະຕິບັດ (CRP) ອາດຈະພິຈາລະນາໃຫ້ເລີ່ມໃໝ່ ຈາກຕອນທີ່ກອງເລຂາກວດກາການປະຕິບັດໄດ້ຮັບຄຳຮ້ອງ. ຖ້າບໍ່ດັ່ງນັ້ນ, ຫລັກຖານອັນໃໝ່ນັ້ນຈະຖືວ່າເປັນຫລັກຖານເພີ່ມເຕີມ, ແລະຈະຖືກປະຕິບັດຕາມລະບຽບໃນວັກ 52 ຂອງບັນດາຂັ້ນຕອນຕ່າງໆເຫລົ່ານີ້.

## ຄ. ຂໍ້ມູນເພີ້ມເຕີມ

52. ນອກຈາກຂໍ້ມູນທີ່ຄະນະກຳມະການກວດກາການປະຕິບັດ (CRP) ຕ້ອງການແລ້ວ, ຜູ້ຮ້ອງຂໍ (ແລະ ປະຊາຊົນທີ່ໄດ້ຮັບຜົນກະທົບທາງລົບຈາກໂຄງການ ຖ້າຜູ້ຮ້ອງຂໍແມ່ນຕົວແທນຂອງປະຊາຊົນທີ່ໄດ້ຮັບຜົນກະທົບ ຫລື ສະມາຊິກຄະນະບໍລິຫານ, ພະນັກງານທະນາຄານພັດທະນາອາຊີ (ADB), ຫລື ສະມາຊິກອື່ນໆອາດຈະ ໃຫ້ສະມາຊິກຄະນະກຳມະການ (CRP), ກອງເລຂາຄະນະກຳມະການກວດກາການປະຕິບັດຕາມ ຫລື ກອງເລຂາ ຄະນະກຳມະການຮ່ວມ (CRP) ສາມາດຂໍຂໍ້ມູນເພີ່ມເຕີມທີ່ພວກເຂົາເຊື່ອວ່າສອດຄ່ອງກັບການກວດກາ ຄຳຮ້ອງຄືນ. ຜູ້ທີ່ໃຫ້ຂໍ້ມູນສາມາດຂໍໃຫ້ເກັບຂໍ້ມູນສ່ວນຕົວເຂົາເຈົ້າເປັນຄວາມລັບ. ຄະນະກຳມະການກວດກາການປະຕິບັດ (CRP) ຈະແຈ້ງລາຍລະອຽດເພີ່ມເຕີມແກ່ຜູ້ຮ້ອງຂໍກ່ຽວກັບທຸກຂໍ້ມູນທາງດ້ານວັດຖຸໂດຍຄົບເລົ່ານີ້. ຄະນະກຳມະການກວດກາການປະຕິບັດ (CRP) ອາດຈະຂໍລາຍລະອຽດເພີ່ມເຕີມຈາກຜູ້ມີສ່ວນຮ່ວມອື່ນໆຖ້າຈຳເປັນເມື່ອໄດ້ຮັບຂໍ້ມູນ ດັ່ງກ່າວ.

# VI. ຄວາມໂປ່ງໃສ ແລະ ຄວາມລັບ

## ກ. ຄວາມໂປ່ງໃສ

53. ການປະຕິບັດການຂອງຄະນະກຳມະການກວດກາການປະຕິບັດ (CRP) ໃນທຸກໆຂັ້ນຕອນຂອງໄລຍະການກວດກາຄືນຈະຖືກປະຕິບັດຢ່າງໂປ່ງໃສເທົ່າທີ່ຈະເປັນໄປໄດ້ໂດຍອີງໃສ່ບັນດານະໂຍບາຍ ແລະ ຂະບວນການຕ່າງໆ ທີ່ ສອດຄ່ອງຂອງທະນາຄານພັດທະນາອາຊີ (ADB).

## ຂ. ຄວາມລັບ

54. ສະມາຊິກຄະນະກຳມະການກວດກາການປະຕິບັດ (CRP) ແລະ ພະນັກງານຫ້ອງການຄະນະກຳມະການການກວດກາຄືນການປະຕິບັດ (OCRP) ແມ່ນຢູ່ພາຍໃຕ້ບັນດານະໂຍບາຍວ່າດ້ວຍຄວາມລັບ ແລະ ການຮົ່ວໄຫລຂອງຂໍ້ມູນຂອງທະນາຄານພັດທະນາອາຊີ (ADB), ລວມທັງເງື່ອນໄຂທີ່ເລັ່ງໃສ່ການຮັບປະກັນຄວາມລັບຂອງຂໍ້ມູນທາງທຸລະກິດຈະບໍ່ຖືກເປີດເຜີຍ. ເມື່ອມີຮ້ອງຂໍ, ຄະນະກຳມະການກວດກາການປະຕິບັດ (CRP) ຈະຮັກສາຂໍ້ມູນ ສ່ວນຕົວຂອງຜູ້ຮ້ອງຂໍ ແລະ ຜູ້ໃຫ້ຂໍ້ມູນ.

55. ທຸກໆວັດຖຸ ຫລື ຂໍ້ມູນທີ່ສົ່ງໃຫ້ສະມາຊິກ ຄະນະກຳມະການກວດກາການປະຕິບັດ (CRP) ຫລື ພະນັກງານຫ້ອງການຄະນະກຳມະການການກວດກາຄືນການປະຕິບັດ (CRP) ໂດຍສະເພາະອັນທີ່ບົ່ງບອກວ່າເປັນຄວາມລັບ

ອາດຈະບໍ່ຖືກເຜີຍແຜ່ແກ່ພາກສ່ວນອື່ນໂດຍທີ່ບໍ່ໄດ້ຮັບອະນຸຍາດຈາກຜູ້ທີ່ສົ່ງໃຫ້. ຜູ້ທີ່ສົ່ງຂໍ້ມູນຄວນຈະຂຽນໄວ້ວ່າ ຕົວຢ່າງຂອງວັດຖຸ ຫລື ຂໍ້ມູນອາດຈະຖືກໃຊ້ໂດຍຄະນະກຳມະການກວດກາການປະຕິບັດ (CRP) ໃນການ ປະຕິບັດວຽກງານ.

## VII. ການເຜີຍແຜ່ຂໍ້ມູນຂ່າວສານອອກສູ່ສາທາລະນະຊົນ

### ກ. ການເຜີຍແຜ່ຕໍ່ສາທາລະນະຊົນ

56. ສະມາຊິກຄະນະກຳມະການກວດກາການປະຕິບັດ (CRP) ແລະ ພະນັກງານຫ້ອງການຄະນະກຳມະການ ການກວດກາຄືນການປະຕິບັດ (CRP) ໃຫ້ມີໂອກາດພົບປະ ແລະ ປຶກສາກັນກັບສາທາລະນະຊົນກ່ຽວກັບກົນໄກການ ລາຍງານຜົນກະທົບຈາກໂຄງການທາງດ້ານຮູບການທົ່ວໄປ ແລະ ບັນຫາສະເພາະທີ່ກ່ຽວຂ້ອງກັບໄລຍະການກວດກາ ຄືນ. ພວກເຂົາຈະອຳນວຍຄວາມສະດວກເລື່ອງຄຳແນະນຳ ແລະ ທິດທາງສຳລັບຜູ້ທີ່ຈະຮ້ອງຂໍ ຫລື ຕົວແທນທີ່ກຳລັງ ພິຈາລະນາຍື່ນຄຳຮ້ອງ.

57. ພະນັກງານຫ້ອງການຄະນະກຳມະການການກວດກາຄືນການປະຕິບັດ (OCRP) ຈະດຳເນີນການກະຈາຍ ຂໍ້ມູນຂ່າວສານ ແລະ ດຳເນີນເຜີຍແຜ່ຕໍ່ສາທາລະນະຊົນ ກ່ຽວກັບກົນໄກ ທັງຢູ່ພາຍໃນທະນາຄານພັດທະນາອາຊີ (ADB) ແລະ ປະເທດສະມາຊິກ.

### ຂ. ການອອກຂ່າວ ແລະ ການສື່ສານກັບສາທາລະນະຊົນ

58. ຄະນະກຳມະການກວດກາການປະຕິບັດ (CRP) ຈະອອກຂ່າວຂອງຕົນເອງ ແລະ ເຮັດການສື່ສານກັບ ສາທາລະນະຊົນ. ກ່ອນທີ່ຈະອອກຂ່າວ ຫລື ສື່ສານຕ່າງໆ, ພະນັກງານຫ້ອງການຄະນະກຳມະການການກວດກາຄືນ ການປະຕິບັດ (OCRP) ຈະແຈ້ງຫ້ອງການພົວພັນຕ່າງປະເທດ, ເຮັດສຳເນົາໄປຫ້ອງການປະທານ, ເພື່ອໃຫ້ ທະນາຄານພັດທະ ນາອາຊີ ຮັບຮູ້ ແລະ ກຽມຕອບຄຳຖາມກັບສື່ສາທາລະນະ.

59. ໂດຍຄຳນຶງເຖິງການກວດການຄືນ, ຄະນະກຳມະການກວດກາການປະຕິບັດ (CRP) ຈະສະແດງຄວາມຖະ ໜອມທອມຕົນຕໍ່ບັນດາປະເທດກູ້ຢືມ ແລະ ຈະບໍ່ໃຫ້ສຳພາດກ່ຽວກັບການກວດກາໃນຂະນະທີ່ຢ້ຽມຢາມສະໜາມໃນ ປະເທດກູ້ຢືມ. ຄະນະກຳມະການກວດກາການປະຕິບັດ (CRP) ຈະບໍ່ໃຫ້ສຳພາດແກ່ທຸກສື່ໜັງສືພິມໃນແຕ່ລະໄລຍະ ຂອງການກວດກາ ຫລື ການຕິດຕາມພາຍຫລັງການຕັດສິນໃຈ, ຍົກເວັ້ນຈະມີການແກ້ໄຂບັນດາຂະບວນການຕ່າງໆ ໃຫ້ຈະແຈ້ງ.

### ຄ. ເວັບໄຊທ໌

60. ຄະນະກຳມະການກວດກາການປະຕິບັດ (CRP) ຈະຮັກສາເວັບໄຊທ໌ ຂອງຕົນເອງທີ່ www.compliance.adb.org, ເຊິ່ງລວມມີບັນດາຂໍ້ມູນທີ່ມີໃນວັກທີ່ 61 ແລະ 62 ຂອງບັນດາຂະບວນການຕ່າງໆ ເຫລົ່ານີ້.

### ງ. ການລົງທະບຽນສຳລັບຄົນທົ່ວໄປ

61. ຄະນະກຳມະການກວດກາການປະຕິບັດ (CRP) ຈະແຈ້ງຜູ້ຮ້ອງຂໍ ແລະ ສາທາລະນະຊົນໂດຍກົງ ຜ່ານການລົງທະບຽນການຮ້ອງຂໍເຊິ່ງມີໃນເວັບໄຊທ໌ຂອງການກວດກາການປະຕິບັດເຊິ່ງມີເປົ້າໝາຍສະເພາະ ໃນໄລຍະການກວດກາຄືນດັ່ງລຸ່ມນີ້:

(i) ການລົງທະບຽນ ແລະ ການແຈ້ງໃຫ້ຊາບກ່ຽວກັບຄຳຮ້ອງ (ບາດກ້າວ 2),
(ii) ການຕັດສິນຄວາມເໝາະສົມຂອງຄຳຮ້ອງ (ບາດກ້າວ 3),
(iii) ການອະນຸມັດການກວດກາການປະຕິບັດຕາມຂອງຄະນະບໍລິຫານ (ບາດກ້າວ 4),
(iv) ຮ່າງໜ້າວຽກ ແລະ ຂອບເຂດເວລາສຳລັບການດຳເນີນການກວດກາການປະຕິບັດ ໄດ້ຖືກສົ່ງໄປໃຫ້ພະນັກງານຫ້ອງການຄະນະກຳມະການບໍລິຫານການກວດກາຄືນການປະຕິບັດ (CRP) ເພື່ອຂໍອະນຸມັດ (ບາດກ້າວ 5),
(v) ໜ້າທີ່ຮັບຜິດຊອບ ແລະ ກຳນົດເວລາສຳລັບການດຳເນີນການກວດກາການປະຕິບັດໄດ້ ຖືກແຈ້ງອອກ ແລະ ເຜີຍແຜ່;
(vi) ຮ່າງບົດລາຍງານການກວດກາການປະຕິບັດໄດ້ຖືກສົ່ງໄປໃຫ້ຝ່າຍບໍລິຫານ ແລະ ຜູ້ຮ້ອງຂໍ (ບາດກ້າວ 6),
(vii) ບົດລາຍງານສຸດທ້າຍຂອງການກວດກາການປະຕິບັດໄດ້ຖືກສົ່ງໄປໃຫ້ຄະນະບໍລິຫານ (ບາດກ້າວ 8),
(viii) ການຕັດສິນໃຈຂອງຄະນະບໍລິຫານ (ບາດກ້າວ 9);
(ix) ຄະນະກຳມະການກວດກາການປະຕິບັດກຳລັງເລີ່ມຕິດຕາມການຈັດຕັ້ງປະຕິບັດໂຄງການເຊິ່ງ ເປັນຈຸດຫລັກຂອງການຮ້ອງຂໍ;
(x) ຄະນະກຳມະການກວດກາການປະຕິບັດໄດ້ສົ່ງຮ່າງບົດລາຍງານການຄວບຄຸມໄປໃຫ້ຄະນະກຳມະການການ ກວດກາການປະຕິບັດ (BCRC); ແລະ
(xi) ຄະນະກຳມະການກວດກາການປະຕິບັດ (CRP) ໄດ້ສົ່ງບົດລາຍງານການຄວບຄຸມສຸດທ້າຍ ໄປໃຫ້ຄະນະບໍລິຫານ ແລະ ສາທາລະນະຊົນສາມາດເບິ່ງໄດ້.

**ຈ. ການເຜີຍແຜ່ບົດລາຍງານສູ່ສາທາລະນະຊົນ**

62. ຄະນະກຳມະການກວດກາການປະຕິບັດ (CRP) ຈະສ້າງບົດລາຍງານລຸ່ມນີ້ ຫລື ເອກະສານໃສ່ໃນເວັບໄຊທ໌ ແລະ ໃຫ້ທຸກຄົນທີ່ຂໍສຳເນົາເອກະສານ:

(i) ບົດລາຍງານການກວດກາການປະຕິບັດກ່ຽວກັບຄວາມເໝາະສົມໃນການຄັດເລືອກ ແລະ ການຕັດສິນໃຈ ຂອງຄະນະບໍລິຫານ, ພາຍໃນ 7 ວັນຫລັງຈາກທີ່ໄດ້ຮັບອະນຸມັດຈາກຄະນະບໍລິຫານສຳລັບການກວດກາການ ປະຕິບັດ,
(ii) ບົດກຳນົດໜ້າວຽກ, ລວມທັງຂອບເຂດການກວດກາຄືນ, ວິທີການ ແລະ ເວລາທີ່ສະເໜີ, ພາຍໃນ 14 ວັນ ຈາກວັນທີ່ໄດ້ຮັບອະນຸມັດຈາກຄະນະບໍລິຫານສຳລັບການກວດກາ,
(iii) ການຕັດສິນໃຈຂັ້ນສຸດທ້າຍຂອງຄະນະບໍລິຫານ ແລະ ບົດລາຍງານຂອງການກວດກາການປະຕິບັດຕາມພ້ອມ ດ້ວຍເອກະສານຕິດຄັດ, ພາຍໃນ 7 ວັນຂອງການຕັດສິນຂອງຄະນະບໍລິຫານ,
(iv) ບົດລາຍງານການຕິດຕາມການກວດກາພ້ອມດຽວກັນກັບເວລາທີ່ພວກເຂົາຍື່ນໃຫ້ຄະນະບໍລິຫານ ແລະ ພາກສ່ວນກຽວຂ້ອງອື່ນໆ, ແລະ
(v) ບົດລາຍງານປະຈຳປີຂອງການກວດກາການປະຕິບັດພາຍໃນ 4 ເດືອນຫລັງຈາກທ້າຍປີປະຕິທິນແຕ່ລະປີ.

## VIII. ພາກທົ່ວໄປ

### ກ. ການເຂົ້າຫາທະນາຄານພັດທະນາອາຊີ (ADB): ພະນັກງານ ແລະ ຂໍ້ມູນ

63. ສະມາຊິກຄະນະກຳມະການກວດກາການປະຕິບັດ (CRP) ແລະ ພະນັກງານຫ້ອງການຄະນະກຳມະການ (OCRP) ຈະມີສິດເຂົ້າເຖິງພະນັກງານທະນາຄານພັດທະນາອາຊີ (ADB) ແລະ ຝ່າຍບໍລິຫານ, ແລະ ການເກັບມ້ຽນຂໍ້ມູນຂອງທະນາຄານທຸກຢ່າງເຊິ່ງມີການອະນຸຍາດຈາກຄະນະກຳມະການກວດກາການປະຕິບັດ (CRP) ທີ່ເຫັນວ່າສອດຄ່ອງ.

### ຂ. ຂະບວນການບໍລິຫານຕ່າງໆຂອງຄະນະກຳມະການກວດກາການປະຕິບັດ (CRP)

64. ຄະນະກຳມະການກວດກາການປະຕິບັດ (CRP) ໄດ້ຮັບເອົາຂະບວນການບໍລະຫານສຳລັບການປະຕິບັດໜ້າທີ່ພາຍໃນ. ຂະບວນການບໍລະຫານເລົ່ານີ້ແມ່ນມີໃນເວັບໄຊທ໌ການກວດກາການປະຕິບັດຕາມ.

### ຄ. ບົດລາຍງານປະຈຳປີ

65. ຄະນະກຳມະການກວດກາການປະຕິບັດ (CRP) ຈະພິມບົດລາຍງານປະຈຳປີພາຍໃນ 4 ເດືອນຫລັງຈາກທ້າຍປີປະຕິທິນຂອງແຕ່ລະປີເຊິ່ງຈະລວມມີ:

(i) ລາຍລະອຽດຂອງການຮ້ອງຂໍທີ່ຖືກພິຈາລະນາ,
(ii) ບົດສະຫລຸບຂອງກິດຈະກຳຂອງການກວດກາການປະຕິບັດໃນການຕອບຮັບກັບການຮ້ອງຂໍແຕ່ລະອັນ,
(iii) ບົດສະຫລຸບຂອງກິດຈະກຳການຄວບຄຸມຂອງຄະນະກຳມະການກວດກາການປະຕິບັດ (CRP),
(iv) ຂໍ້ມູນທີ່ກ່ຽວກັບງົບປະມານ ແລະ ການໃຊ້ຈ່າຍຂອງຄະນະກຳມະການກວດກາການປະຕິບັດ (CRP), ແລະ
(v) ຄຳແນະນຳທາງດ້ານນະໂຍບາຍອີງຕາມບົດຮຽນທີ່ໄດ້ຮັບຈາກການຮ້ອງຂໍສຳລັບການກວດກາຄືນທີ່ຜ່ານມາ.

### ງ. ຄຳແນະນຳທາງດ້ານກົດໝາຍ

66. ຄະນະກຳມະການກວດກາການປະຕິບັດ (CRP) ຈະຂໍຄຳແນະນຳຈາກທີ່ປຶກສາທົ່ວໄປຂອງທະນາຄານພັດ ທະນາອາຊີ (ADB) ກ່ຽວກັບບັນດາກົດໝາຍ, ສິດ, ແລະ ໜ້າທີ່ຕ່າງໆພາຍໃຕ້ສັນຍາຂອງທະນາຄານ ແລະ ທຸກຂໍ້ຕົກລົງທີ່ທະນາຄານພັດທະນາອາຊີ (ADB) ມີສ່ວນຮ່ວມ, ແລະ ທີ່ກ່ຽວພັນກັບສິດ ແລະ ໜ້າທີ່ຂອງທະນາຄານກັບຄຳຮ້ອງຂໍໃຫ້ມີການກວດກາການປະຕິບັດ.

### ຈ. ການກວດຄືນບັນດາຂະບວນການປະຕິບັດງານຂອງການກວດກາການປະຕິບັດ

67. ທຸກໆພາກສ່ວນທີ່ສົນໃຈແມ່ນສາມາດສົ່ງຄຳແນະນຳສຳລັບການກວດກາຄືນບັນດາຂັ້ນຕອນເຫລົ່ານີ້. ຄະນະກຳມະການກວດກາການປະຕິບັດ (CRP) ອາດຈະກວດຄືນບັນດາຂັ້ນຕອນຕ່າງໆເປັນຄັ້ງຄາວ, ລວມທັງດັດແກ້ການຮ້ອງຂໍຂັ້ນຕອນສຳລັບການກວດກາຄືນຂອງໂຄງການພາກເອກະຊົນທີ່ສອດຄ່ອງກັບເງື່ອນໄຂຂອງເອກະສານຂອງຄະນະບໍລິຫານ.

## ສ. ການປະສານງານກັນ

68. ຄະນະກຳມະການກວດກາການປະຕິບັດ (CRP) ຈະປະສານງານເລື່ອງກິດຈະກຳຕ່າງໆເທົ່າທີ່ຈະເຮັດໄດ້, ກັບບັນດາກົນໄກການລາຍງານຜົນກະທົບຈາກໂຄງການຂອງທຸກໆສະຖາບັນທີ່ຮ່ວມທຶນກັນທີ່ດຳເນີນການກວດກາໂຄງການດຽວກັນແຕ່ແຍກກັນ. ຄະນະກຳມະການກວດກາການປະຕິບັດ (CRP) ຈະຂໍສ້າງສາຍສຳພັນ ແລະ ແບ່ງປັນ ປະສົບການ ແລະ ບົດຮຽນທີ່ໄດ້ຮັບກັບກົນໄກການລາຍງານຜົນກະທົບຈາກໂຄງການກັບບັນດາສະຖາບັນທີ່ຄ້າຍກັນ.

69. ຄະນະກຳມະການກວດກາການປະຕິບັດ (CRP) ເຮັດວຽກຮ່ວມກັນຢ່າງໃກ້ຊິດກັບຜູ້ອຳນວຍຄວາມສະດວກພິເສດສຳລັບໂຄງການ (SPF) ທີ່ໜ້າທີ່ວຽກງານເປັນທີ່ເຊື່ອຖືໄດ້. ຄະນະກຳມະການກວດກາການປະຕິບັດ (CRP) ຈະປະສານງານກັບຜູ້ອຳນວຍຄວາມສະດວກພິເສດສຳລັບໂຄງການ (SPF) ໃນການດຳເນີນການເຜີຍແຜ່ຕໍ່ມະຫາ ຊົນກົນໄກການລາຍງານຂອງທະນາຄານພັດທະນາອາຊີ (ADB); ແລະ ເຮັດວຽກກັບພະແນກປະຕິບັດການ, ຂົງເຂດ ແລະ ພະແນກເພື່ອການພັດທະນາແບບຍືນຍົງ ແລະ ສູນກາງອົງການທີ່ບໍ່ຂຶ້ນກັບລັດຖະບານ ແລະ ພະແນກພົວພັນຕ່າງປະເທດ ເພື່ອຮັບປະກັນວ່າການກະຈາຍຂໍ້ມູນ ແລະ ກິດຈະກຳຂອງຄະນະກຳມະການກວດກາການປະຕິບັດຕາມ ແລະ ການເຜີຍແຜ່ຕໍ່ສາທາລະນະຊົນແມ່ນຕິດພັນກັບກິດຈະກຳຕ່າງໆຂອງທະນາຄານພັດທະນາອາຊີ (ADB) ເພື່ອສົ່ງເສີມການພົວພັນກັນກັບຜູ້ຮັບໂຄງການ ຫລື ພາກສ່ວນກ່ຽວຂ້ອງເຊິ່ງລວມມີກຸ່ມຄົນໃນສັງຄົມ.

## ຊ. ກອງເລຂາທີ່ສະໜັບສະໜູນຄະນະກຳມະການການກວດກາການປະຕິບັດ (BCRC)

70. ຫ້ອງການການຄະນະກຳມະການ (OCRP) ຈັດຕັ້ງກອງເລຂາໃຫ້ເພື່ອຊ່ວຍຄະນະກຳມະການບໍລິຫານການກວດກາການປະຕິບັດ, ລວມທັງການບໍລິຫານຄ່າໃຊ້ຈ່າຍປະຈຳປີຂອງຄະນະກຳມະການບໍລິຫານການກວດກາ (BCRC).

## ຍ. ການຕິດຕໍ່ກັບ ຄະນະກຳມະການການກວດກາການປະຕິບັດ (CRP) ແລະ ຜູ້ອຳນວຍຄວາມສະດວກພິເສດສຳລັບໂຄງການ (SPF)

71. ຄຳຖາມກ່ຽວກັບການກວດກາການປະຕິບັດ ຫລື ກ່ຽວກັບບັນດາຂັ້ນຕອນຕ່າງໆຄວນຈະສົ່ງໂດຍກົງໄປທີ່:

Secretary, Compliance Review Panel
Asian Development Bank
6 ADB Avenue
Mandaluyong City
1550 Metro Manila, Philippines

ໂທລ: +632 632 4149
ແຟັກ: +632 636 2088
ອີເມລ: crp@adb.org

72. ທຸກໆຄຳຖາມກ່ຽວກັບການປະຕິບັດການຂອງຜູ້ອຳນວຍຄວາມສະດວກສຳລັບໂຄງການ (SPF) ຫລື ຂັ້ນຕອນການປະຕິບັດການຄວນຈະສົ່ງໄປໂດຍກົງທີ່:

Special Project Facilitator
Asian Development Bank
6 ADB Avenue
Mandaluyong City
1550 Metro Manila, Philippines

ໂທລ: +632 632 4825

ແຟັກ: +632 636 2490

ອີເມລ: spf@adb.org

## ແບບຢ່າງການຮ້ອງຂໍສໍາລັບການກວດການການປະຕິບັດ

ພວກເຮົາມີຈົດໝາຍແບບຢ່າງລຸ່ມນີ້ສົ່ງເຖິງຄະນະກໍາມະການການກວດກາການປະຕິບັດ (CRP), ລວມທັງຂໍ້ມູນທີ່ຜູ້ຮ້ອງຂໍຄວນຈະຕື່ມໃສ່ໃນຈົດໝາຍທີ່ຖາມເຖິງການກວດກາຂອງທະນາຄານພັດທະນາອາຊີ (ADB). ມັນຈໍາເປັນທີ່ຈະຕ້ອງເຮັດຕາມວິທີນີ້, ແຕ່ວ່າເງື່ອນໄຂຂໍ້ມູນດັ່ງກ່າວນີ້ຈະເຮັດໃຫ້ການລົງທະບຽນຂໍການກວດກາໄວຂຶ້ນ. ຂໍ້ມູນບາງຢ່າງຕ້ອງສະໜອງໃຫ້ຜູ້ອໍານວຍຄວາມສະດວກສໍາລັບໂຄງການ (SPF) ກ່ອນ, ແລະ ສາມາດທວນຄືນໄດ້ບ່ອນນີ້. ຂໍ້ມູນເພີ່ມເຕີມຄວນຈະຂຽນເປັນລາຍລະອຽດເທົ່າທີ່ຈະເຮັດໄດ້, ແລະ ການບົ່ງບອກເຖິງຜົນຮ້າຍຂອງນະໂຍບາຍຈະຊ່ວຍຄະນະກໍາມະການກວດກາການປະຕິບັດ (CRP) ໃນການກວດກາຄືນ.

---

ວັນທີຂອງການຮ້ອງຂໍ: __________

ເຖິງ: Secretary, Compliance Review Panel
Asian Development Bank
6 ADB Avenue
Mandaluyong City
1550 Metro Manila, Philippines

ໂທລ: +632 632 4149
ແຝັກ: +632 636 2088
ອີເມລ: crp@adb.org

ກອງເລຂາທີ່ນັບຖື:

ພວກເຮົາ, ຜູ້ທີ່ເຊັນຈົດໝາຍສະບັບນີ້, ອາໃສ/ເປັນຕົວແທນແກ່ປະຊາຊົນທີ່ອາໃສຢູ່ໃນ _________, ແລະ ຂໍໃຫ້ຄະນະກໍາມະການການກວດກາການປະຕິບັດ (CRP) ຊ່ວຍພວກເຮົາໂດຍກວດກາການປະຕິບັດຕາມຂອງທະນາຄານພັດທະນາອາຊີ (ADB) ກັບບັນດານະໂຍບາຍ ແລະ ຂັ້ນຕອນ ຂອງໂຄງການທີ່ກ່າວໄວ້ລຸ່ມນີ້. ພວກເຮົາມີຄວາມຄຸ້ນເຄີຍກັບບັນດາຂັ້ນຕອນການປະຕິບັດຂອງຄະນະກໍາມະການກວດກາການປະຕິບັດ (CRP), ແລະ ເຂົ້າໃຈວ່າຄະນະກໍາມະການກວດກາການປະຕິບັດ (CRP) ກ່ອນອື່ນໝົດຈະກວດກາວ່າການຮ້ອງຂໍນີ້ຖືກກັບຂໍ້ກໍານົດທີ່ບົ່ງໄວ້ຫລື ບໍ່.

ຊື່ຂອງໂຄງການທີ່ເປັນຜົນຮ້າຍຕໍ່ພວກເຮົາ, ຫລື ອາດຈະເປັນຜົນຮ້າຍຕໍ່ພວກເຮົາໃນອະນາຄົດ, ແມ່ນ __________, ຕັ້ງຢູ່ _________.

ພວກເຮົາເຊື່ອໝັ້ນວ່າ ທະນາຄານພັດທະນາອາຊີ (ADB) ໄດ້ລະເລີຍຕໍ່ການປະຕິບັດຕາມນະໂຍບາຍ ແລະ ບັນດາຂັ້ນຕອນຕ່າງໆ, ໂດຍສະເພາະແມ່ນ ___________, ແລະ ທີ່ເຮັດແບບນັ້ນ, ພວກເຮົາໄດ້ຮັບຜົນຮ້າຍ ຫລື ໄດ້ຮັບຜົນຮ້າຍໂດຍກົງ ແລະ ຜົນຮ້າຍທາງວັດຖຸທີ່ພວກເຮົາສາມາດບອກລາຍລະອຽດໄດ້. ຜົນຮ້າຍສະເພາະທີ່ພົວພັນເຖິງການລະເມີດນະໂຍບາຍນີ້ແມ່ນ ___________.

ພວກເຮົາຂໍສະເໜີໃຫ້ທະນາຄານພັດທະນາອາຊີ (ADB) ເພື່ອຊ່ວຍພວກເຮົາແກ້ໄຂຜົນຮ້າຍໃນທາງດັ່ງລຸ່ມນີ້ _______________.

ໃນເມື່ອກ່ອນພວກເຮົາພະຍາຍາມທີ່ຈະເບິ່ງແຍງບັນຫາຂອງພວກເຮົາເອງ ກັບ ພະນັກງານ ທະນາຄານພັດທະນາອາຊີ (ADB) ແລະ ຜູ້ອໍານວຍຄວາມສະດວກພິເສດສໍາລັບໂຄງການ (SPF). ນີ້ແມ່ນການເກັບກໍາຂໍ້ມູນໂດຍຫຍໍ້ຂອງເຫດການທີ່ເກີດຂື້ນ: _______________. ພວກເຮົາອ້າງອີງຄໍາຮ້ອງທຸກເຖິງຄະນະກໍາມະການກວດກາການປະຕິບັດ (CRP) ເພາະວ່າ ຜົນຮັບຂອງການຕິດຕໍ່ໃນເມືອກ່ອນບໍ່ເປັນທີ່ໜ້າພໍໃຈດັ່ງນີ້: _____________.

ນອກຈາກຂໍ້ມູນທີ່ໃຫ້ເທິງນີ້ແລ້ວ, ຍັງມີເອກະສານຫລາຍໆຢ່າງທີ່ສາມາດຊ່ວຍຄະນະກໍາມະການກວດກາການປະຕິ ບັດ (CRP) ໃຫ້ເຂົ້າໃຈສະພາບຂອງພວກເຮົາ. ພວກເຮົາຄັດຕິດມາພ້ອມນີ້ລາຍຊື່ເອກະສານຕ່າງໆ, ໂດຍບອກບ່ອນທີ່ ຄະນະກໍາມະການກວດກາການປະຕິບັດ (CRP) ສາມາດເອົາສໍາເນົາໄດ້.

ຊື່ຂອງພວກເຮົາ, ທີ່ຢູ່, ແລະ ຂໍ້ມູນເພື່ອຕິດຕໍ່ມີດັ່ງລຸ່ມນີ້.

| ____________________ | ____________________ |
|---|---|
| ລາຍເຊັນ | ລາຍເຊັນ |

[ທີ່ຢູ່, ເບີໂທລະສັບ ແລະ ເບີແຟັກ, ແລະ ອີເມລຂອງແຕ່ລະຄົນ, ທີ່ມີ]

ໃນກໍລະນີຂອງສະພາບຕ່າງໆທີ່ພວກເຮົາເປັນຕົວແທນແກ່ອົງການ ຫລື ກຸ່ມຄົນໃຫຍ່ກຸ່ມໜຶ່ງ, ກະລຸນາຕິດຕໍ່ພວກເຮົາຜ່ານຜູ້ທີ່ມີທີ່ຢູ່ຕິດຕໍ່ດັ່ງລຸ່ມນີ້.

## ຂັ້ນຕອນຂອງການກວດກາການປະຕິບັດ

**ບາດກ້າວ 1: ການຍື່ນຄຳຮ້ອງ**

- ຄຳຮ້ອງສຳລັບການກວດກາການປະຕິບັດຕາມແມ່ນຖືກຍື່ນກັບຄະນະກຳມະການກວດກາການປະຕິບັດ (CRP).

↓

7 ວັນ ຈາກວັນທີ່ໄດ້ຮັບຄຳຮ້ອງ

**ບາດກ້າວ 2: ລົງທະບຽນ ແລະ ການຮັບເອົາຄຳຮ້ອງ**

- ຄະນະກຳມະການກວດກາການປະຕິບັດ (CRP) ຈະລົງທະບຽນ ຄຳຮ້ອງ ແລະ ແຈ້ງມັນ.

↓

14 ວັນ ຈາກວັນລົງທະບຽນຄຳ ຮ້ອງ (21 ວັນຈາກວັນລົງທະບຽນຄຳຮ້ອງຖ້າຜູ້ອຳນວຍຄວາມສະດວກພິເສດສຳລັບໂຄງການ (SPF) ຕັດສິນວ່າການຄຳທຸກນັ້ນບໍ່ເໝາະສົມ)

**ບາດກ້າວ 3: ການພິຈາລະນາຄວາມເໝາະສົມຂອງຄຳຮ້ອງ**

- ຄະນະກຳມະການກວດກາການປະຕິບັດ (CRP) ຈະພິຈາລະນາຄວາມເໝາະສົມຂອງຄຳຮ້ອງ ແລະ ຈະແຈ້ງຜູ້ຮ້ອງຂໍຊາບ ກ່ຽວກັບ ການຕັດສິນ.
- ຖ້າວ່າຄະນະກຳມະການກວດກາການປະຕິບັດ (CRP) ພິຈາລະນາວ່າຄຳຮ້ອງບໍ່ເໝາະສົມ, ພວກເຂົາຈະແຈ້ງຄະນະບໍລິຫານກ່ຽວກັບຄວາມບໍ່ເໝາະສົມ ຂອງຄຳຮ້ອງ.
- ຖ້າຄະນະກຳມະການກວດກາການປະຕິບັດ (CRP) ພິຈາລະນາວ່າ ຄຳຮ້ອງ ເໝາະສົມ, ພວກເຂົາຈະແນະນຳຄະນະບໍລິຫານວ່າການກວດກາການປະຕິບັດ ຖືກອະນຸຍາດ.

↓

21 ວັນຈາກວັນທີ່ໄດ້ຮັບຄຳແນະນຳຈາກຄະນະກຳມະການກວດກາການປະຕິບັດ (CRP)

**ບາດກ້າວ 4: ການອະນຸມັດໃຫ້ມີການກວດກາການປະຕິບັດຕາມໂດຍຄະນະບໍລິຫານ**

- ຄະນະບໍລິຫານຈະອະນຸມັດການກວດກາການປະຕິບັດໂດຍບໍ່ມີຂໍ້ຂັດແຍ່ງ.

↓

7 ວັນຈາກວັນທີ່ໄດ້ຮັບການຕັດສິນໃຈຈາກຄະນະບໍລິຫານ

- ຜູ້ຮ້ອງຂໍຈະຖືກແຈ້ງກ່ຽວກັບການຕັດສິນຂອງຄະນະບໍລິຫານເລື່ອງການອະນຸມັດການກວດກາການປະຕິບັດ.

↓

14 ວັນຈາກວັນທີ່ໄດ້ຮັບການອະນຸມັດການກວດກາຈາກຄະນະບໍລິຫານ

**ບາດກ້າວ 5: ການດຳເນີນການກວດກາການປະຕິບັດ**

- ຄະນະກຳມະການກວດກາການປະຕິບັດຕາມຈະແຈ້ງກັບຄະນະກຳມະການບໍລິຫານການກວດກາ (BCRC) ກ່ຽວກັບການສະເໜີໜ້າທີ່ຮັບຜິດຊອບ (TOR) ແລະ ກຳນົດເວລາ.
- ຄະນະກຳມະການກວດກາການປະຕິບັດຕາມຈະເປີດເຜີຍໜ້າທີ່ຮັບຜິດຊອບ (TOR) ແລະ ກຳນົດເວລາທີ່ບອກເຖິງວິທີການ ແລະ ຄາດຄະເນກຳນົດເວລາ ຂອງການກວດກາ.

↓

- ຄະນະກຳມະການກວດກາການປະຕິບັດດຳເນີນການປະຕິບັດການກວດກາການປະຕິບັດ.

↓

**ບາດກ້າວ 6: ຮ່າງບົດລາຍງານການກວດກາການປະຕິບັດ**

- ເມື່ອການກວດກາສຳເລັດແລ້ວ, ຄະນະກຳມະການກວດກາການປະຕິບັດ (CRP) ຈະສ້າງບົດລາຍງານກ່ຽວກັບຂໍ້ມູນ ແລະ ຄຳແນະນຳແກ່ຝ່າຍບໍລິຫານ ແລະ ຜູ້ຮ້ອງຂໍ.

↓

30 ວັນຈາກວັນທີ່ໄດ້ຮັບຮ່າງບົດລາຍງານຈາກຄະນະກຳມະການກວດກາການປະຕິບັດ (CRP)

**ບາດກ້າວ 7: ຄຳເຫັນຂອງຝ່າຍບໍລິຫານ ແລະ ຜູ້ຮ້ອງຂໍຕໍ່ກັບຮ່າງບົດລາຍງານການກວດກາ**

- ຝ່າຍບໍລິຫານ ແລະ ຜູ້ຮ້ອງຂໍຈະໃຫ້ຄຳເຫັນຕໍ່ຮ່າງບົດລາຍງານຂອງຄະນະກຳມະການກວດກາການປະຕິບັດ (CRP).

↓

14 ວັນຈາກວັນທີ່ໄດ້ຮັບຄຳເຫັນຈາກຝ່າຍບໍລິຫານ ແລະ ຜູ້ຮ້ອງຂໍ

**ບາດກ້າວ 8: ບົດລາຍງານການກວດກາການປະຕິບັດ**

- ຄະນະກຳມະການກວດກາການປະຕິບັດຕາມຈະພິຈາລະນາຄຳເຫັນຈາກຝ່າຍບໍລິຫານ ແລະ ຜູ້ຮ້ອງຂໍ ແລະ ປັບປຸງແປງຕາມຄວາມຈຳເປັນກ່ອນທີ່ຈະສົ່ງບົດລາຍງານພ້ອມກັບຂໍ້ມູນ ແລະ ຄຳແນະນຳເພື່ອຮັບປະກັນການກວດກາຂອງໂຄງການໃຫ້ຄະນະ ບໍລິຫານ.

↓

21 ວັນຈາກວັນທີ່ໄດ້ຮັບບົດລາຍງານສຸດທ້າຍຈາກຄະນະກຳມະການກວດກາການປະຕິບັດ (CRP)

**ບາດກ້າວ 9: ການຕັດສິນຂອງຄະນະບໍລິຫານ**

- ຄະນະບໍລິຫານຈະພິຈາລະນາບົດລາຍງານສຸດທ້າຍຂອງຄະນະກຳມະການກວດກາ ແລະ ຕັດສິນໃຈອີງຕາມຄຳແນະນຳວ່າຈະນຳພາໂຄງການໄປສູ່ຜົນສຳເລັດ ແລະ ເຮັດໃຫ້ມີຜົນຮ້າຍໜ້ອຍລົງໄດ້ແນວໃດ, ຖ້າເໝາະສົມ.

↓

7 ວັນຈາກວັນຕັດສິນຂອງຄະນະບໍລິຫານ

- ການຕັດສິນໃຈຂອງຄະນະບໍລິຫານ ແລະ ບົດລາຍງານສຸດທ້າຍຂອງຄະນະກຳມະການກວດກາການປະຕິບັດ (CRP), ພ້ອມກັບຄຳເຫັນຕິດຄັດ, ຈະຖືກສົ່ງໄປ ໃຫ້ຜູ້ຮ້ອງຂໍ

↓

**ການຄວບຄຸມການປະຕິບັດບັນດາການແກ້ໄຂຂໍ້ຜິດພາດ**
**ອະນຸມັດໂດຍຄະນະບໍລິຫານ**